


# ກອງປະຊຸມປຶກສາຫາລື ຫຼາຍຝ່າຍ ປະຈຳປີ 2021 ກ່ຽວກັບການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີ ຄວາມຮັບຜິດຊອບ ຢູ່ ສ.ປ.ປ. ລາວ

ພາຍໃຕ້ກອບ ຂອງໂຄງການ “ສົ່ງເສີມການຄຸ້ມຄອງບໍລິຫານການລົງທຶນ ໃນຂົງເຂດທີ່ດິນທີ່ມີຄວາມຮັບຜິດຊອບ (RGIL)” ແລະ “ປັບປຸງສະພາບ ແວດລ້ອມ ສໍາລັບການລົງທຶນທີ່ມີຄວາມຮັບຜິດຊອບ ໃນລະບົບການ ຜະລິດກະສິກຳ ແລະ ສະບຽງອາຫານ”

ນະຄອນຫຼວງວຽງຈັນ, ສ.ປ.ປ. ລາວ

ວັນທີ 10 ພະຈິກ 2021

Food and Agriculture Organization of the United Nations

Co-funded by the European Union

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ສາລະບານ

ອັກສອນຫຍໍ້ ... iii
1 ບົດສັງ ລວມຫຍໍ້ ... 1
2 ຄວາມເປັນມາຂອງ ກອງປະຊຸມປຶກສາຫາລືຫຼາຍຝ່າຍ ... 3
3 ພິທີເປີດ ກອງປະຊຸມປຶກສາຫາລືຫຼາຍຝ່າຍ ປະຈຳປີ 2021 ... 4
3.1 ຄຳເຫັນກ່າວເປີດກອງປະຊຸມຢ່າງເປັນທາງການຂອງ ທ່ານ ອຸຕະແກ້ວ ແກ້ວດວງສີ, ຫົວໜ້າກົມ IPD-MPI ... 4
3.2 ຄຳເຫັນ ຂອງ ທ່ານ ນາງ ອີວາ ພຣີດິເກີ (Eva Prediger), ຜູ້ຈັດການໂຄງການ RGIL ໃນ ສປປ ລາວ ... 4

4 ເນື້ອໃນສຳຄັນ ຂອງວະລະທີ 1 ... 5
4.1 10 ຫຼັກການ ກ່ຽວກັບ ການລົງທຶນທີ່ມີຄວາມຮັບຜິດຊອບໃນຂະແໜງການກະສິກຳ ແລະ ລະບົບອາຫານ (CFS-RAI) ... 5
4.2 ຜົນການສຳຫຼວດ RAI ຢູ່ໃນ ສປປ ລາວ, ດຳເນີນໂດຍອົງການ FAO ... 5
4.3 ກອບດ້ານນິຕິກຳ ແລະ ການຈັດຕັ້ງປະຕິບັດ RAI ຂອງພາກລັດ ... 6
4.4 ການຈັດຕັ້ງປະຕິບັດ RAI ຂອງພາກເອກະຊົນ ... 7
4.5 ພາບລວມຂອງການລົງທຶນໃນຂົງເຂດທີ່ດິນ ແລະ ຄຸນນະພາບການລົງທຶນ ຢູ່ໃນ ສປປ ລາວ ... 8
4.6 ຜົນໄດ້ຮັບທີ່ສຳຄັນ ຈາກວາລະທີ 1 ... 8

5 ເນື້ອໃນສຳຄັນ ຂອງວາລະທີ 2 ... 9
5.1 ການເຊົ່າທີ່ດິນ (ຄຳແນະນຳ ຂອງ MPI ສະບັບເລກທີ 0457) ແລະ ປະສົບການຈາກການຈັດຕັ້ງປະຕິບັດ (ກໍລະນີຂອງການປູກກ້ວຍຢູ່ແຂວງ ຫຼວງພະບາງ) ... 9
5.2 ການເຮັດສັນຍາຜູກພັນ ໃນການຜະລິດກະສິກຳ ... 10
5.3 ເຄື່ອງມືຕິດຕາມໂຄງການລົງທຶນ (IPM) ແລະ ເວທີແລກປ່ຽນ ລະຫວ່າງ ນັກລົງທຶນ ... 11
5.4 ກົນໄກແກ້ໄຂຄຳຮ້ອງທຸກ ຂອງບໍລິສັດ ... 12

6 ເວທີສົນທະນາກັບຜູ້ຊ່ຽວຊານ ແລະ ກຸ່ມສົນທະນາ ກ່ຽວກັບ ມາດຕະການຈັດຕັ້ງປະຕິບັດ ... 14
6.1 ເວທີສົນທະນາ ກັບ ຜູ້ຊ່ຽວຊານ ຕາງໜ້າກຸ່ມຜູ້ທີ່ກ່ຽວຂ້ອງ (Panel discussion) ... 14
6.2 ການຈັດກຸ່ມສົນທະນາ: ຄັດເລືອກຂົງເຂດທີ່ເປັນບູລິມະສິດ ເພື່ອຈັດຕັ້ງປະຕິບັດ ພາຍໃນ 12 ເດືອນຂ້າງໜ້າ ... 16

7 ຄຳເຫັນກ່າວປິດກອງປະຊຸມ ... 17
8 ສະຫຼຸບ ແລະ ບົດຮຽນທີ່ ທາງຄະນະຈັດກອງປະຊຸມ ຖອດຖອນໄດ້ ... 18

ເອກະສານຊ້ອນທ້າຍທີ I ... 20
ເອກະສານຊ້ອນທ້າຍທີ II ... 27
ເອກະສານຊ້ອນທ້າຍທີ III ... 33

# ອັກສອນຫຍໍ້

| | |
|---|---|
| ASEAN | ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້<br>Association of Southeast Asian Nations |
| BMEL | ກະຊວງອາຫານ ແລະ ກະສິກຳ ຂອງສະຫະພັນ ເຢຍລະມັນ<br>German Federal Ministry of Food and Agriculture |
| BMZ | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງສະຫະພັນເຢຍລະມັນ<br>German Federal Ministry for Economic Cooperation and Development |
| CDE | ສູນເພື່ອການພັດທະນາ ແລະ ສິ່ງແວດລ້ອມ<br>Centre for Development and Environment |
| CFS-RAI | ຄະນະກຳມະການດ້ານຄວາມໝັ້ນຄົງດ້ານສະບຽງອາຫານໂລກ - ຫຼັກການສຳລັບການລົງທຶນໃນຂົງເຂດກະສິກຳ ແລະ ລະບົບອາຫານທີ່ມີຄວາມຮັບຜິດຊອບ<br>Committee on World Food Security - Principles for Responsible Investment in Agriculture and Food Systems |
| CSOs | ອົງການຈັດຕັ້ງທາງສັງຄົມ<br>Civil Society Organisations |
| DG | ຫົວໜ້າກົມ<br>Director-General |
| DDG | ຮອງຫົວໜ້າກົມ<br>Deputy Director-General |
| DOPF | ກົມແຜນການ ແລະ ການເງິນ<br>Department of Planning and Finance |
| EIA | ການປະເມີນຜົນກະທົບດ້ານສິ່ງແວດລ້ອມ<br>Environmental Impact Assessment |
| EU | ສະຫະພາບເອີຣົບ<br>European Union |
| FAO | ອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ<br>Food and Agriculture Organization of the United Nations |
| FPIC | ການຍິນຍອມແບບອິດສະຫຼະ ໂດຍມີການແຈ້ງລ່ວງໜ້າ<br>Free, Prior and Informed Consent |
| GCCM | ກົນໄກສຳລັບການ ແກ້ໄຂຄຳຮ້ອງທຸກ ແລະ ການຕິດຕໍ່ສື່ສານ<br>Grievance, Complaints, and Communication Management |

| | |
|---|---|
| GIZ | ອົງການຮ່ວມມືສາກົນຂອງປະເທດເຢຍລະມັນ<br>Deutsche Gesellschaft für Internationale Zusammenarbeit |
| GRM | ກົນໄກການແກ້ໄຂຄຳຮ້ອງທຸກ<br>Grievance Redress Mechanism |
| IFC | International Finance Corporation<br>ອົງການການເງິນສາກົນ |
| IPD | ກົມສົ່ງເສີມການລົງທຶນ<br>Investment Promotion Department |
| IPM | ການຕິດຕາມໂຄງການລົງທຶນ<br>Investment Project Monitoring |
| LC | ສະພາປະຊາຊົນທ້ອງຖິ່ນ<br>Local Council |
| MAF | ກະຊວງກະສິກຳ ແລະ ປ່າໄມ້<br>Ministry of Agriculture and Forestry |
| MPI | ກະຊວງແຜນການ ແລະ ການລົງທຶນ<br>Ministry of Planning and Investment |
| MTP | ບໍລິສັດແມ່ຂອງປູກໄມ້<br>Mekong Timber Plantations |
| RAI | ການລົງທຶນດ້ານກະສິກຳທີ່ມີຄວາມຮັບຜິດຊອບ<br>Responsible Agricultural Investment |
| RGIL | ການຄຸ້ມຄອງບໍລິຫານ ການລົງທຶນ ໃນຂົງເຂດທີ່ດິນທີ່ມີຄວາມຮັບຜິດຊອບ<br>Responsible Governance of Investment in Land |
| VGGT | ບົດແນະນຳແບບສະມັກໃຈ ກ່ຽວກັບ ການຄຸ້ມຄອງບໍລິຫານ ການຄອບຄອງດິນທີ່ມີຄວາມຮັບຜິດຊອບ<br>Voluntary Guidelines on the Responsible Governance of Tenure of Land |

# 1 ບົດສັງ ລວມຫຍໍ້

ຂະແໜງການກະສິກຳຍັງຄົງເປັນກະດູກສັນຫຼັງ ຂອງເສດຖະກິດ ຂອງສປປ ລາວ ເຖິງວ່າ ຂະແໜງການນີ້ມີການປະກອບສ່ວນພຽງແຕ່ 16 ສ່ວນຮ້ອຍຂອງລວມຍອດຜະລິດຕະພັນພາຍໃນ (GDP) ກໍຕາມ. ການເພີ່ມຂຶ້ນ ຂອງການລົງທຶນໃນຂົງເຂດທີ່ດິນສຳລັບການກະສິກຳ ໃນຊຸມປີຜ່ານມາ ໄດ້ນຳເອົາສິ່ງທ້າທາຍຫຼາຍຢ່າງຕໍ່ກັບການພັດທະນາ. ການລົງທຶນດ້ານກະສິກຳທີ່ມີຄວາມຮັບຜິດຊອບ (RAI) ສາມາດສົ່ງເສີມຊີວິດການເປັນຢູ່ແບບຍືນຍົງ, ປັບປຸງຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພສະນາການ ຂອງປະຊາຊົນ ໂດຍສະເພາະແມ່ນຊຸມຊົນຕ່າງໆທີ່ດ້ອຍໂອກາດໃຫ້ດີຂຶ້ນ. RAI ຍັງສາມາດປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມສ່ຽງທາງດ້ານສິ່ງແວດລ້ອມ, ຫຼຸດຜ່ອນຄວາມທຸກຍາກ, ສົ່ງເສີມຄວາມສະເໝີພາບ ທາງສັງຄົມ ແລະ ບົດບາດຍິງ-ຊາຍ, ລົບລ້າງການໃຊ້ແຮງງານເດັກໃນຮູບແບບຕ່າງໆ, ສົ່ງເສີມການເຂົ້າຮ່ວມ ແລະ ການມີສ່ວນຮ່ວມຂອງສັງຄົມ, ການເຕີບໂຕດ້ານເສດຖະກິດ ແລະ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ. ການຮ່ວມມື ແລະ ຄວາມພະຍາຍາມໃນການປະສານງານ ຂອງຫຼາຍຂະແໜງການ ແມ່ນເປັນສິ່ງຈຳເປັນທີ່ສຳຄັນ ໃນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການລົງທຶນໃນຂະແໜງກະສິກຳທີ່ມີຄວາມຮັບຜິດຊອບ ຢູ່ໃນ ສປປ ລາວ.

ກອງປະຊຸມປຶກສາຫາລືຫຼາຍຝ່າຍ ປະຈຳປີ 2021 ໄດ້ຈັດຂຶ້ນໂດຍການຮ່ວມມື ລະຫວ່າງ ກົມສົ່ງເສີມການລົງທຶນ (IPD), ກະຊວງແຜນການ ແລະ ການລົງທຶນ (MPI) ແລະ ກົມແຜນການ ແລະ ການເງິນ (DoPF), ກະຊວງກະສິກຳ ແລະ ປ່າໄມ້ (MAF) ໂດຍການສະໜັບສະໜູນຂແງ ອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ (FAO) ເຊິ່ງປະສານສົມທົບກັບອົງການ ເຮລເວຕັສ໌ (Helvetas) ແລະ ອົງການ GIZ ພາຍໃຕ້ ກອບຂອງໂຄງການ "ສົ່ງເສີມການຄຸ້ມຄອງບໍລິຫານ ການລົງທຶນທາງໃນຂົງເຂດທີ່ດິນທີ່ມີຄວາມຮັບຜິດຊອບ (RGIL)" ຊຶ່ງເປັນສ່ວນໜຶ່ງຂອງແຜນງານຄຸ້ມຄອງທີ່ດິນລາວ-ເຢຍລະມັນ ທີ່ຈັດຕັ້ງປະຕິບັດໂດຍ ອົງການ GIZ ແລະ ໄດ້ຮັບການສະໜັບສະໜູນທຶນຮ່ວມ ຈາກ ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງປະເທດເຢຍລະມັນ (BMZ) ແລະ ສະຫະພາບເອີຣົບ (EU). ກອງປະຊຸມຫຼາຍຝ່າຍ ປະຈຳປີ 2021 ນີ້ ຍັງນອນຢູ່ໃນວຽກສ່ວນໜຶ່ງຂອງອົງການ FAO ທີ່ສະໜັບສະໜູນໂຄງການ "ປັບປຸງສະພາບແວດລ້ອມ ສຳລັບການລົງທຶນທີ່ມີຄວາມຮັບຜິດຊອບ ໃນລະບົບການຜະລິດກະສິກຳ ແລະ ສະບຽງອາຫານ" ຢູ່ ສປປ ລາວ ໂດຍການສະໜັບສະໜູນ ຂອງກະຊວງ ອາຫານ ແລະ ກະສິກຳ ຂອງສະຫະພັນ ເຢຍລະມັນ. ກອງປະຊຸມຫຼາຍຝ່າຍ ປະຈຳປີ 2021 ໄດ້ດຳເນີນພາຍໃຕ້ການເປັນປະທານຂອງ ທ່ານ ອຸດຕະແກ້ວ ແກ້ວດວງສິນ, ຫົວໜ້າ IPD-MPI ແລະ ການເປັນປະທານຮ່ວມຂອງ ທ່ານ ນາງ ອີວາ ພຣີດິເກີ (Eva Prediger), ຜູ້ຈັດການໂຄງການ RGIL ລາວ ຈາກອົງການ GIZ ແລະ ທ່ານ ນາງ ອາກິໂກະ ອິໂນກູຊິ (Akiko Inoguchi), ພະນັກງານດ້ານປ່າໄມ້ ຈາກອົງການ FAO.

ກອງປະຊຸມຫຼາຍຝ່າຍຄັ້ງທີ 1 ໄດ້ຈັດຂຶ້ນໃນວັນທີ 10 ພະຈິກ 2021. ກອງປະຊຸມຫຼາຍຝ່າຍ ປະຈຳປີ 2021 ແມ່ນກອງປະຊຸມ ຄັ້ງທີ 1 ຂອງບັນດາກອງປະຊຸມຫຼາຍຝ່າຍ ທີ່ມີແຜນຈັດອີກໃນປີ 2022 ເພື່ອທົບທວນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ໜ້າວຽກ ແລະ ຍຸດທະສາດ ທີ່ໄດ້ຕົກລົງຮ່ວມກັນ. ກອງປະຊຸມຫຼາຍຝ່າຍ ແມ່ນເວທີໃນການແລກປ່ຽນປະສົບການກ່ຽວກັບ ສະຖານະພາບ ແລະ ການປະຕິບັດທີ່ດີ ທີ່ໄດ້ຈາກການຈັດຕັ້ງປະຕິບັດວຽກງານ ການສົ່ງເສີມການລົງທຶນໃນຂະແໜງກະສິກຳທີ່ມີຄວາມຮັບຜິດຊອບ ຢູ່ ສປປ ລາວ, ເປັນການຮັບຮູ້ເຖິງບົດບາດທີ່ສຳຄັນຂອງແຕ່ລະພາກສ່ວນຮ່ວມກັນ ແລະ ເພື່ອກຳນົດທິດທາງຕໍ່ໜ້າໃນການຄຸ້ມຄອງບໍລິຫານ ການລົງທຶນໃນຂົງເຂດທີ່ດິນ ທີ່ມີຄວາມຮັບຜິດຊອບ.

ເນື້ອຫາຕົ້ນຕໍຂອງການປຶກສາຫາລືມີດັ່ງນີ້:

- ກອບນິຕິກຳ ທີ່ຕິດພັນກັບ ການລົງທຶນໃນຂົງເຂດທີ່ດິນ ຄວນໄດ້ຮັບການບັງຄັບໃຊ້ ຢ່າງມີຄວາມສອດຄ່ອງ ແລະ ເປັນເອກະພາບກັນ. ຄວນມີການປຶກສາຫາລື ແລະ ປະສານງານກັນ ລະຫວ່າງ ຂະແໜງການຂອງລັດ ຂັ້ນເທິງ ແລະ ຂັ້ນລຸ່ມ ໃຫ້ຫຼາຍຂຶ້ນ ພ້ອມທັງຄວນມີການກຳນົດ ພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງບັນດາຂະແໜງການ ຂັ້ນເທິງ ແລະ ຂັ້ນລຸ່ມ ດັ່ງກ່າວ ໃຫ້ຈະແຈ້ງ ແລະ ໃຫ້ມີຄວາມເຂົ້າໃຈທີ່ເປັນເອກະພາບ. ຄຳແນະນຳສຳລັບ ພາກທຸລະກິດ ຄວນມີຄວາມຊັດເຈນ ເພື່ອຫຼີກລ່ຽງ ບັນດາຂະບວນການ ທີ່ຊັກຊ້າ ແລະ ແກ່ຍາວ.

- ຄວາມຮັບຮູ້ ແລະ ຂີດຄວາມສາມາດ ຂອງທ້ອງຖິ່ນ ແມ່ນມີຄວາມສຳຄັນຫຼາຍ ໃນການປັບປຸງ ການຈັດຕັ້ງປະຕິບັດ ວຽກງານການລົງທຶນໃນຂະແໜງກະສິກຳທີ່ມີຄວາມຮັບຜິດຊອບ. ຄວາມພະຍາຍາມ ກ່ຽວກັບ ວຽກງານການລົງທຶນໃນຂະແໜງກະສິກຳທີ່ມີຄວາມຮັບຜິດຊອບ ຄວນສຸມໃສ່ ອົງການຈັດຕັ້ງຢູ່ຂັ້ນທ້ອງຖິ່ນ ແລະ ຊຸມຊົນ ໃຫ້ຫຼາຍກວ່າເກົ່າ, ບັນດາເຄື່ອງມື ແລະ ອຸປະກອນ ສຳລັບການສົ່ງເສີມ ການລົງທຶນໃນຂະແໜງກະສິກຳ ທີ່ມີຄວາມຮັບຜິດຊອບ ຄວນປັບໃຫ້ມີຄວາມສອດຄ່ອງກັບສະພາບຈຸດພິເສດ ຂອງສປປ ລາວ ແລະ ມີຄວາມງ່າຍດາຍ ໃນການນຳໃຊ້ຢູ່ຂັ້ນທ້ອງຖິ່ນ.
- ການສຳຫຼວດ ແລະ ຂຶ້ນບັນຊີໂຄງການລົງທຶນ ຄວນດຳເນີນ ຢ່າງມີຄວາມໂປ່ງໃສ ເພື່ອເຮັດໃຫ້ສາມາດ ກຳນົດພື້ນທີ່ດິນ ທີ່ມີຢູ່ ແລະ ມີຄວາມເໝາະສົມ ສຳລັບໂຄງການລົງທຶນ ມີຄວາມຊັດເຈນ.
- ເພື່ອຮັບປະກັນ ແຜນພັດທະນາ ໄປຄຽງຄູ່ກັບ ການປ້ອງກັນຜົນກະທົບນັ້ນ ມັນຮຽກຮ້ອງໃຫ້ມີ ການຕິດຕາມກວດກາ ແລະ ປະເມີນຜົນໂຄງການ ຢ່າງເປັນລະບົບ ລວມທັງ ການຕິດຕາມຜົນກະທົບດ້ານສິ່ງແວດລ້ອມ ຕະຫຼອດໄລຍະ ຂອງການດຳເນີນໂຄງການລົງທຶນ.
- ກົນໄກການແກ້ໄຂຄຳຮ້ອງທຸກທີ່ເໝາະສົມ ລວມທັງ ລະບົບຖານຂໍ້ມູນທີ່ກ່ຽວຂ້ອງ ຄວນຈະໄດ້ຮັບການສ້າງຂຶ້ນ. ອົງການຈັດຕັ້ງຂອງລັດ ຄວນມີບົດບາດສຳຄັນໃນການແກ້ໄຂບັນດາຂໍ້ຂັດແຍ່ງ.
- ມັນມີຄວາມຈຳເປັນ ຈະຕ້ອງໄດ້ເລືອກ (trade-off) ລະຫວ່າງ ດ້ານສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ ແລະ ຄວນຈະມີການເຈລະຈາຢ່າງລະມັດລະວັງ ໃນການຊອກຫາຄວາມສົມດູນ ລະຫວ່າງ ບັນດາເປົ້າໝາຍການພັດທະນາດັ່ງກ່າວ ເພື່ອຮັບປະກັນໃຫ້ ມີຜົນກະທົບທາງດ້ານບວກ ແລະ ຄວາມສອດຄ່ອງກັບລະບຽບກົດໝາຍ.
- ການຈັດຕັ້ງປະຕິບັດທີ່ດີ ກ່ຽວກັບ ການລົງທຶນໃນຂະແໜງກະສິກຳທີ່ມີຄວາມຮັບຜິດຊອບ ຂອງນັກລົງທຶນຈຳນວນໜຶ່ງ ແມ່ນມີຢູ່ສປປ ລາວ ແລ້ວ ລວມທັງນັກລົງທຶນ ແລະ ພາກລັດ ຈຳນວນໜຶ່ງ ໄດ້ມີການລິເລີ່ມ ກ່ຽວກັບ ວຽກງານດັ່ງກ່າວແລ້ວ ໂດຍໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາ, ແຕ່ເຫັນວ່າ ມັນມີຄວາມຈຳເປັນ ໃນການປັບປຸງສະພາບແວດລ້ອມ ເພື່ອສົ່ງເສີມການລົງທຶນທີ່ມີຄວາມຮັບຜິດຊອບດັ່ງກ່າວ ໃຫ້ກາຍເປັນມາດຖານ ສຳລັບທຸກໆໂຄງການລົງທຶນ.

## 2 ຄວາມເປັນມາຂອງ ກອງປະຊຸມປຶກສາຫາລືຫຼາຍຝ່າຍ

ຈຸດປະສົງຂອງ ກອງປະຊຸມປຶກສາຫາລືຫຼາຍຝ່າຍ ປະຈຳປີ 2021 ແມ່ນເພື່ອເຕົ້າໂຮມບັນດາຜູ້ທີ່ມີສ່ວນກ່ຽວຂ້ອງ - ອົງການຈັດຕັ້ງພາກລັດ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ (CSOs), ພາກເອກະຊົນ ແລະ ຊຸມຊົນ - ເພື່ອແລກປ່ຽນ ຄວາມຮູ້, ກຳນົດສິ່ງທ້າທາຍ ແລະ ກຳນົດສິ່ງທີ່ຈະຕ້ອງໄດ້ຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸ ການຄຸ້ມຄອງບໍລິຫານ ການລົງທຶນໃນຂົງເຂດທີ່ດິນທີ່ມີຄວາມຮັບຜິດຊອບ. ຈຸດປະສົງລວມຂອງ ກອງປະຊຸມປຶກສາຫາລືຫຼາຍຝ່າຍ ປີ 2021 ແມ່ນເພື່ອປຶກສາຫາລື ວິທີການປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍ ການລົງທຶນທີ່ມີຄວາມຮັບຜິດຊອບໃນຂະແໜງການກະສິກຳ ແລະ ປ່າໄມ້ ຢູ່ ສປປ ລາວ.

ຈຸດປະສົງສະເພາະແມ່ນ:

- ເພື່ອສ້າງຄວາມເຂົ້າໃຈຮ່ວມກັນ ແລະ ສັງເກດຕິລາຄາຄືນ ກ່ຽວກັບ ສະພາບການຈັດຕັ້ງປະຕິບັດ ການລົງທຶນດ້ານກະສິກາ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ ຢູ່ ສປປ ລາວ;
- ເພື່ອແລກປ່ຽນ ປະສົບການ ແລະ ບົດຮຽນທີ່ດີ ທີ່ຈັດຕັ້ງປະຕິບັດຢູ່ ສປປ ລາວ ແລະ ການນຳໃຊ້ເຄື່ອງມືຕ່າງໆ (ເຊັ່ນ: ການປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ (ESIA), ການມີສ່ວນຮ່ວມຂອງຊຸມຊົນ FPIC, ກົນໄກການຮ້ອງທຸກ, ການເຊົ່າທີ່ດິນ, ສັນຍາກະສິກາ);
- ເພື່ອສ້າງຄວາມຮັບຮູ້ ແລະ ມີຄວາມເອກະພາບກັນ ກ່ຽວກັບ ບົດບາດ ຂອງບັນດາຜູ້ມີສ່ວນກ່ຽວຂ້ອງ ແລະ ກຳນົດວິທີການໃນການເສີມສ້າງຄວາມເຂັ້ມແຂງດ້ານການຮ່ວມມືກັນ ລະຫວ່າງ ບັນດາຂະແໜງການຂອງລັດ, ພາກສ່ວນທຸລະກິດ, ຊຸມຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມພັດທະນາ ເພື່ອໃຫ້ມີການປັບປຸງ ການຈັດຕັ້ງປະຕິບັດ, ປັບປຸງບັນດາຊ່ອງຫວ່າງທີ່ມີຢູ່ ແລະ ການປະເຊີນໜ້າໃນການແກ້ໄຂບັນດາສິ່ງທ້າທ້າຍຕ່າງໆ.

ກອງປະຊຸມປຶກສາຫາລືຫຼາຍຝ່າຍ ປະຈຳປີ 2021 ໄດ້ຈັດຂຶ້ນໃນວັນທີ 10 ພະຈິກ 2021 ໂດຍຮູບແບບປະສົມປະສານ ລະຫວ່າງການປະຊຸມແບບເຊິ່ງໜ້າຢູ່ໂຮງແຮມຄຣາວ ພລາຊາ ແລະ ອອນລາຍ ເຊິ່ງຜູ້ເຂົ້າຮ່ວມສ່ວນໃຫຍ່ແມ່ນຮ່ວມຜ່ານອອນລາຍ. ໂດຍມີຜູ້ເຂົ້າຮ່ວມທັງໝົດ 152 ທ່ານ, ໃນນີ້ 69 ທ່ານ ແມ່ນມາຈາກອົງການຈັດຕັ້ງຂອງລັດຖະບານ, 58 ທ່ານແມ່ນມາຈາກ CSOs/ອົງການຈັດຕັ້ງທາງສັງຄົມ, 9 ທ່ານຈາກສະຖາບັນການສຶກສາ/ຄົ້ນຄວ້າ, 2 ທ່ານ ຈາກບໍລິສັດເອກະຊົນ ແລະ 14 ທ່ານແມ່ນທີ່ປຶກສາອິດສະຫຼະ. ຜູ້ເຂົ້າຮ່ວມຈາກພາກລັດແມ່ນມີທັງຈາກຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ *(ສຳລັບລາຍຊື່ຜູ້ເຂົ້າຮ່ວມ ຂໍໃຫ້ເບິ່ງເອກະສານຊ້ອນທ້າຍ II).*

ການຈັດກອງປະຊຸມປຶກສາຫາລືຫຼາຍຝ່າຍ ແມ່ນ ກິດຈະກຳທີ່ສຳຄັນອັນໜຶ່ງຂອງໂຄງການ RGIL ແລະ ໂຄງການ ຂອງອົງການ FAO . ໂຄງການດັ່ງກ່າວ ເຊິ່ງຈັດຕັ້ງປະຕິບັດຢູ່ໃນ ຫຼາຍປະເທດ ຂອງທະວີບ ອາຊີ ແລະ ອາຟຣິກາ ໂດຍມີຈຸດປະສົງເພື່ອຮັບປະກັນການລົງທຶນໃນຂົງເຂດທີ່ດິນ ມີປະສິດທິຜົນສູງ, ປະກອບສ່ວນໃນການຄຸ້ມຄອງທີ່ດິນແບບຍືນຍົງ ແລະ ເຄົາລົບສິດ ແລະ ຄວາມຕ້ອງການຂອງປະຊາຊົນທ້ອງຖິ່ນ ໂດຍສະເພາະກຸ່ມຄົນທີ່ມີຄວາມສ່ຽງ ແລະ ແມ່ຍິງ. ຮູບແບບວິທີການຈັດຕັ້ງປະຕິບັດຂອງໂຄງການເຫຼົ່ານີ້ ແມ່ນເນັ້ນໃສ່ການສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດຂອງຜູ້ທີ່ມີສ່ວນກ່ຽວຂ້ອງຕົ້ນຕໍ (ເຊັ່ນ: ອົງການຈັດຕັ້ງຂອງລັດ, ນັກລົງທຶນທີ່ໄດ້ຮັບການຄັດເລືອກ, CSOs ແລະ ຕົວແທນຂອງຊຸມຊົນ) ແລະ ປັບປຸງກອບນິຕິກຳ ກ່ຽວກັບ ການລົງທຶນໃນຂົງເຂດກະສິກຳ ແລະ ສຳລັບໂຄງການ RGIL ແມ່ນລວມທັງ ການລົງທຶນໃນຂົງເຂດປ່າໄມ້.

# 3 ພິທີເປີດ ກອງປະຊຸມປຶກສາຫາລືຫຼາຍຝ່າຍ ປະຈຳປີ 2021

## 3.1 ຄຳເຫັນກ່າວເປີດກອງປະຊຸມຢ່າງເປັນທາງການຂອງ ທ່ານ ອຸດຕະແກ້ວ ແກ້ວດວງສີນ, ຫົວໜ້າກົມ IPD-MPI

ໃນພິທີເປີດກອງປະຊຸມ ທ່ານ ອຸດຕະແກ້ວ ແກ້ວດວງສີນ ໄດ້ອະທິບາຍເຖິງຄວາມເປັນຫ່ວງເປັນໄຍ ກ່ຽວກັບ ການລົງທຶນໃນຂົງເຂດທີ່ດິນຂະໜາດໃຫຍ່, ຫຼາຍໆພາກສ່ວນໄດ້ຮ່ວມກັນພະຍາຍາມຊອກຫາວິທີທາງເພື່ອເຮັດໃຫ້ການລົງທຶນໃນຂົງເຂດທີ່ດິນມີຄວາມສ່ຽງຕ່ຳ ແລະ ມີຄວາມຍືນຍົງ, ໃນເວລາດຽວກັນ ກໍຕ້ອງເຄົາລົບປະຊາຊົນ ແລະ ຮັກສາສິ່ງແວດລ້ອມ. ການລົງທຶນກະ ສິກຳທີ່ມີຄວາມຮັບຜິດຊອບ ແມ່ນຕິດພັນກັບການຄຸ້ມຄອງບໍລິຫານທີ່ດິນທີ່ດີ ແລະ ຄວາມໝັ້ນຄົງໃນສິດທິການຖືຄອງທີ່ດິນ. ເພື່ອຮັບປະກັນການພັດທະນາແບບຍືນຍົງນັ້ນ ປະເທດເຮົາຕ້ອງການດຶງດູດການລົງທຶນທີ່ເພີ່ມຂຶ້ນ ແຕ່ ຕ້ອງແມ່ນການລົງທຶນທີ່ດຳເນີນຢ່າງມີຄວາມຮັບຜິດຊອບສູງ.

ຫຼັກການສຳລັບການລົງທຶນໃນດ້ານກະສິກຳ ແລະ ລະບົບອາຫານທີ່ມີຄວາມຮັບຜິດຊອບ ຂອງຄະນະກຳມະການດ້ານຄວາມໝັ້ນຄົງດ້ານສະບຽງອາຫານໂລກ (CFS-RAI) ໄດ້ຮັບການຮ່າງຂຶ້ນ, ເຈລະຈາ ແລະ ຮັບຮອງໂດຍ ບັນດາປະເທດສະມາຊິກ ໃນປີ 2014. ຫຼັກການເຫຼົ່ານີ້ໄດ້ຮັບການຮັບຮອງຈາກບັນດາປະເທດສະມາຊິກອາຊຽນ ລວມທັງ ສປປ ລາວ ໃນປີ 2018. ເພື່ອຮັບປະກັນການລົງທຶນໃນຂະແໜງການກະສິກຳ ໃຫ້ສາມາດມີມາດຕະຖານສາກົນ ໂດຍອີງຕາມ CFS-RAI, ເພື່ອປິດຊ່ອງວ່າງ ແລະ ເອົາຊະນະສິ່ງທ້າທາຍຕ່າງໆ ຈະຕ້ອງໄດ້ມີວິທີການສ້າງຄວາມເຂັ້ມແຂງດ້ານການຮ່ວມມື ລະຫວ່າງ ພາກລັດ, ເອກະຊົນ, ຊຸມຊົນ ແລະ ຄູ່ຮ່ວມພັດທະນາ.

## 3.2 ຄຳເຫັນ ຂອງ ທ່ານ ນາງ ອີວາ ພຣີດີເກີ (Eva Prediger), ຜູ້ຈັດການໂຄງການ RGIL ໃນ ສປປ ລາວ

ທ່ານ ນາງ ອີວາ ພຣີດີເກີ, ຜູ້ຈັດການໂຄງການ RGIL ໃນ ສປປ ລາວ, ປະທານຮ່ວມຂອງກອງປະຊຸມ ໄດ້ສະແດງຄວາມຂອບໃຈຕໍ່ຜູ້ເຂົ້າຮ່ວມກອງປະຊຸມ ທີ່ມີຄວາມສົນໃຈຕໍ່ກັບ ກອງປະຊຸມປຶກສາຫາລືຫຼາຍຝ່າຍ ຄັ້ງທີ 1 ນີ້ ເຊິ່ງສາມາດດຶງດູດຜູ້ເຂົ້າຮ່ວມໄດ້ຫຼາຍກວ່າ 150 ຄົນ. ທ່ານໄດ້ຍົກໃຫ້ເຫັນເຖິງການສະໜັບສະໜູນຂອງໂຄງການ RGIL ໃນ ສປປ ລາວ ທີ່ເອົາໃຈໃສ່ການພັດທະນາຂີດຄວາມສາມາດໃຫ້ແກ່ບັນດາຄູ່ຮ່ວມງານຂອງໂຄງການ, ອົງການຈັດຕັ້ງຂອງລັດ, ເອກະຊົນ ແລະ ຊຸມຊົນ. ໂຄງການດັ່ງກ່າວມີເປົ້າໝາຍໃນການກະຕຸ້ນ ສົ່ງ ເສີມການປຶກສາຫາລື ລະຫວ່າງ ຄູ່ຮ່ວມງານ ແລະ ຜູ້ທີ່ກ່ຽວຂ້ອງ. ສະນັ້ນ ກອງປະຊຸມປຶກສາຫາລືຫຼາຍຝ່າຍລະດັບຊາດຄັ້ງນີ້ ແມ່ນໜຶ່ງໃນວຽກງານຫຼັກຂອງໂຄງການ.

ທ່ານ ນາງ ອີວາ ກ່າວຕື່ມອີກວ່າ ກອງປະຊຸມປຶກສາຫາລືຫຼາຍຝ່າຍຄັ້ງນີ້ ໄດ້ຈັດຂຶ້ນໃນເວລາທີ່ເໝາະສົມ ເພາະກອບນິຕິກຳໃໝ່ຈຳນວນໜຶ່ງຫາກໍໄດ້ຮັບການສ້າງຂຶ້ນ ໃນນີ້ລວມມີ ກົດໝາຍວ່າດ້ວຍທີ່ດິນສະບັບໃໝ່, ກົດໝາຍວ່າດ້ວຍປ່າໄມ້ ແລະ ຄຳແນະນຳ ຂອງກະຊວງອີກຈຳນວນໜຶ່ງ. ມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ມີການປັບປຸງເພີ່ມເຕີມ ກ່ຽວກັບ ຂັ້ນຕອນ ແລະ ຂະບວນການຕ່າງໆ ໃນລະດັບນິຕິກຳລຸ່ມກົດໝາຍ ຕົວຢ່າງ ກົນໄກການຮ້ອງທຸກ ເພື່ອໃຫ້ຊຸມຊົນສາມາດເຂົ້າເຖິງໄດ້; ການອະນຸມັດການລົງທຶນທີ່ມີຄວາມໂປ່ງໃສຂຶ້ນຕື່ມ; ການມີສ່ວນຮ່ວມທີ່ພຽງພໍ ຂອງຊຸມຊົນໃນຂະບວນການອະນຸມັດການລົງທຶນ; ພ້ອມທັງ ລາຍລະອຽດປີກຍ່ອຍກ່ຽວກັບການຊົດເຊີຍໃນກໍລະນີ ມີການສູນເສຍທີ່ດິນ.

ທ່ານ ນາງ ອີວາ ກ່າວເຖິງຄວາມສຳຄັນຂອງ RAI ໂດຍລວມ ແລະ ຜົນປະໂຫຍດຂອງມັນທີ່ຈະຂັບເຄື່ອນເສດຖະກິດທ້ອງຖິ່ນ ແລະ ເສດຖະກິດຂອງປະເທດ ພ້ອມທັງ ຜົນປະໂຫຍດທີ່ຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະຜູ້ທີ່ທຸກຍາກ ແລະ ຜູ້ດ້ອຍໂອກາດ ແລະ ມີຄວາມສ່ຽງ. ເຖິງຢ່າງໃດກໍຕາມ ຖ້າການລົງທຶນໃນຂົງເຂດທີ່ດິນ ແລະ ກະສິກຳ ນັບທັງ ປ່າໄມ້ ບໍ່ໄດ້ມີການຄຸ້ມຄອງຢ່າງມີຄວາມຮັບຜິດຊອບທີ່ດີແລ້ວ, ມັນກໍສາມາດສົ່ງຜົນກະທົບດ້ານລົບຫຼາຍຢ່າງ. ສະນັ້ນ ມັນຈຶ່ງມີຄວາມຈຳເປັນຢ່າງຍິ່ງທີ່ຈະຕ້ອງມີການຮ່ວມມືກັນ ລະຫວ່າງ ຜູ້ທີ່ມີສ່ວນກ່ຽວຂ້ອງທັງໝົດ ເພື່ອດຳເນີນການແກ້ໄຂ ຄວາມສັບຊ້ອນກ່ຽວກັບການລົງທຶນທີ່ມີຄວາມ

ຮັບຜິດຊອບນີ້. ການກຳນົດໜ້າທີ່ຮັບຜິດຊອບໃຫ້ຈະແຈ້ງ ແລະ ການຮ່ວມມືທີ່ເຂັ້ມແຂງ ຂອງບັນດາຜູ້ທີ່ກ່ຽວຂ້ອງ ແມ່ນມີຄວາມສຳຄັນຫຼາຍ. ສະນັ້ນ ການປຶກສາຫາລືຄັ້ງນີ້ ແມ່ນໂອກາດທີ່ດີ ສຳລັບຜູ້ທີ່ກ່ຽວຂ້ອງທັງໝົດ ເພື່ອສ້າງຄວາມເຂົ້າໃຈຮ່ວມກັນ ໂດຍການແລກປ່ຽນປະສົບການ, ແລກປ່ຽນວິທີການຈັດຕັ້ງປະຕິບັດທີ່ດີ ແລະ ເຄື່ອງມືຕ່າງໆ ຮ່ວມກັນ.

# 4 ເນື້ອໃນສຳຄັນ ຂອງວາລະທີ 1

## 4.1 10 ຫຼັກການ ກ່ຽວກັບ ການລົງທຶນທີ່ມີຄວາມຮັບຜິດຊອບໃນຂະແໜງການກະສິກຳ ແລະ ລະບົບອາຫານ (CFS-RAI)

ຜູ້ເຂົ້າຮ່ວມໄດ້ຮັບຊົມວິດີໂອ ກ່ຽວກັບ ການຮັບຮອງ ແລະ ການຈັດຕັ້ງປະຕິບັດ CFS-RAI ຢູ່ໃນໂລກ ແລະ ຢູ່ ສປປ ລາວ. ວິດີໂອດັ່ງກ່າວ ໄດ້ເນັ້ນເຖິງ ການຈັດຕັ້ງປະຕິບັດນຳໃຊ້ ຄູ່ມື ຂອງ ASEAN ໃນການສົ່ງເສີມ ການລົງທຶນທີ່ມີຄວາມຮັບຜິດຊອບ ໃນການຜະລິດສະບຽງອາຫານ, ກະສິກຳ ແລະ ປ່າໄມ້ (ການປັບ ຫຼັກການ ຂອງ CFS-RAI ເຂົ້າກັບເງື່ອນໄຂ ຂອງ ASEAN) ໂດຍຜູ້ທີ່ມີສ່ວນກ່ຽວຂ້ອງ (ຝ່າຍລັດຖະບານ, ເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ) ເຊິ່ງມີຄວາມສຳຄັນໃນແງ່ຂອງການຮັບປະກັນການລົງທຶນດ້ານກະສິກຳ ແລະ ປ່າໄມ້ທີ່ມີຄວາມຍືນຍົງ. ນີ້ຈະເປັນບາດກ້າວສຳຄັນທີ່ຈະກ້າວໄປສູ່ການບັນລຸເປົ້າໝາຍການພັດທະນາ ຢູ່ ສປປ ລາວ.

## 4.2 ຜົນການສຳຫຼວດ RAI ຢູ່ໃນ ສປປ ລາວ, ດຳເນີນໂດຍອົງການ FAO

**ທ່ານ ນາງ ອາກິໂກະ ອິໂນກູຊິ (Akiko Inoguchi), ພະນັກງານດ້ານປ່າໄມ້ ຈາກອົງການ FAO ໃນ ສປປ ລາວ** ໄດ້ນຳສະເໜີຜົນການສຳຫຼວດຄັ້ງທີ 1 ກ່ຽວກັບ ຄວາມຮັບຮູ້ກ່ຽວກັບ RAI. ການສຳຫຼວດດັ່ງກ່າວ ມີຜູ້ເຂົ້າຮ່ວມ ທັງໝົດປະມານ 400 ຄົນ ຊຶ່ງສ່ວນໃຫຍ່ແມ່ນ ຄົນລາວ ເຊິ່ງອາດສະທ້ອນໃຫ້ເຫັນເຖິງ ຄວາມສົນໃຈ ຕໍ່ກັບບັນຫາ ການລົງທຶນແບບມີຄວາມຮັບຜິດຊອບ. ຜົນການສຳຫຼວດສະແດງໃຫ້ເຫັນວ່າ ຜູ້ເຂົ້າຮ່ວມມີຄວາມຮູ້ສຶກວ່າ ປະຈຸບັນ ສປປ ລາວ ສາມາດດຶງດູດການລົງທຶນທີ່ມີຄວາມຮັບຜິດຊອບໄດ້ຫຼາຍຂຶ້ນ ແຕ່ເຫັນວ່າ ຍັງມີຫຼາຍບັນຫາ ກ່ຽວກັບ ການລົງທຶນໃນຂົງເຂດກະສິກຳ ແລະ ປ່າໄມ້ ຢູ່ໃນ ສປປ ລາວ ເຊັ່ນ: ການນຳໃຊ້ຢາຂ້າຫຍ້າ, ການຄຸ້ມຄອງສິ່ງເສດເຫຼືອ, ສຸຂະພາບ ແລະ ຄວາມປອດໄພຂອງແຮງງານ, ສະພາບເງື່ອນໄຂການຈ້າງງານ ແລະ ການປຶກສາຫາລືກັບປະຊາຊົນທີ່ບໍ່ທັນພຽງພໍ (ນັກລົງທຶນ ບໍ່ປະຕິບັດຕາມຫຼັກການດ້ານການຍິນຍອມແບບອິດສະຫຼະ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ (FPIC)).

ການສຳຫຼວດຍັງໄດ້ ພົບວ່າ ຜູ້ທີ່ກ່ຽວຂ້ອງນັ້ນລ້ວນແຕ່ມີຄວາມຄິດທີ່ແຕກຕ່າງກັນ ກ່ຽວກັບ ສິ່ງທ້າທາຍຕົ້ນຕໍ ກ່ຽວກັບ RAI ສະນັ້ນ ມັນມີຄວາມຈຳເປັນຕ້ອງໄດ້ມີການປຶກສາຫາລື ແລະ ຫາວິທີການຮ່ວມມືທີ່ດີກວ່າເກົ່າ ລະຫວ່າງ ຜູ້ທີ່ມີສ່ວນກ່ຽວຂ້ອງຕ່າງໆ. ການສຳຫຼວດໄດ້ຮຽກຮ້ອງໃຫ້ມີ ມາດຕະການຈັດຕັ້ງປະຕິບັດອັນຮີບດ່ວນຈຳນວນໜຶ່ງ ເພື່ອແກ້ໄຂບັນຫາທີ່ກ່າວມານັ້ນ ລວມທັງ ການສ້າງສິ່ງຈູງໃຈທີ່ຊັດເຈນກວ່າເກົ່າສຳລັບ RAI. ການກຳນົດບົດບາດ ແລະ ຄວາມຮັບຜິດຊອບໃຫ້ຈະແຈ້ງ ລະຫວ່າງ ອົງການຈັດຕັ້ງຂອງລັດດ້ວຍກັນ, ປັບປຸງການຕິດຕາມ ແລະ ຍົກສູງຄວາມໂປ່ງໃສໃນການເຈລະຈາຕໍ່ລອງການອະນຸມັດການລົງທຶນ. ຂໍ້ຄິດເຫັນ ຂອງຫຼາຍໆທ່ານທີ່ເຂົ້າຮ່ວມການສຳຫຼວດ ແມ່ນຮຽກຮ້ອງ ໃຫ້ມີ 'ການບັງຄັບໃຊ້ກົດໝາຍ' ຢ່າງແຂງແຮງ ລວມທັງ ຜູ້ເຂົ້າຮ່ວມ ການສຳຫຼວດ ຈຳນວນຫຼາຍ ແມ່ນແນະນຳວ່າ ຄວນຈະສຸມໃສ່ ການຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ກົດໝາຍ ໃຫ້ມີຄວາມເປັນເອກະພາບກັນ ແທນທີ່ຈະສຸມໃສ່ແຕ່ການປັບປຸງ ຫຼື ສ້າງກອບນິຕິກຳໃໝ່.

ຜູ້ເຂົ້າຮ່ວມຈຳນວນຫຼາຍ (38%) ບອກວ່າ ຄວາມຮູ້ຂອງເຂົາເຈົ້າ ກ່ຽວກັບ RAI ແມ່ນຕໍ່າ ແລະ ມີຄວາມຕ້ອງການ ຊອກຫາ ຂໍ້ມູນ ແລະ ຕົວຢ່າງທີ່ດີ ເພື່ອຮຽນຮູ້ຕື່ມ.

### 4.3 ກອບດ້ານນິຕິກຳ ແລະ ການຈັດຕັ້ງປະຕິບັດ RAI ຂອງພາກລັດ

**ທ່ານ ພອນທະວີງ ສີງທະລາດ, ຫົວໜ້າພະແນກຮ່ວມມືສາກົນ, IPD-MPI** ໄດ້ນຳສະເໜີ ກ່ຽວກັບ ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບການສົ່ງເສີມການລົງທຶນ, ໂດຍສະເພາະແມ່ນຄຳແນະນຳສະບັບເລກທີ 0457, ວັນທີ 27 ກຸມພາ 2021 ເຊິ່ງເປັນຄຳແນະນຳຂັ້ນກະຊວງ ກ່ຽວກັບ ການອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສຳປະທານ ສຳລັບການປູກພືດກະສິກຳ. ນິຕິກຳນີ້ ໄດ້ຮັບການພັດທະນາຂຶ້ນ ເພື່ອສົ່ງເສີມການຈັດຕັ້ງປະຕິບັດ RAI.

ເພື່ອສົ່ງເສີມການຈັດຕັ້ງປະຕິບັດ RAI, ຍັງໄດ້ມີວຽກງານອື່ນໆອີກຫຼາຍຢ່າງທີ່ໄດ້ຮັບການຈັດຕັ້ງປະຕິບັດ ເຊັ່ນ: ການໃຫ້ຄວາມຮູ້ ກ່ຽວກັບ ກົດໝາຍ ແລະ ການສ້າງຂີດຄວາມສາມາດ, ການກະກຽມສ້າງຄຳແນະນຳເພີ່ມເຕີມຢູ່ຂັ້ນກະຊວງ ກ່ຽວກັບ ການເຮັດສັນຍາຜູກພັນ ໃນການຜະລິດກະສິກຳ ແລະ ການສ້າງຄູ່ມືການຈັດຕັ້ງປະຕິບັດ RAI. ທ່ານ ພອນທະວີງມີຄາເຫັນວ່າ, ປະຈຸບັນ ລັດຖະບານກຳລັງປະເຊີນໜ້າກັບສິ່ງທ້າທາຍຕ່າງໆໃນການຄຸ້ມຄອງທີ່ດິນ ເນື່ອງຈາກວ່າ ການຂະຫຍາຍຕົວຂອງການປູກພືດກະສິກຳໃນດິນຂະໜາດໃຫຍ່ ເຊິ່ງມີອິດທິພົນຕໍ່ເງື່ອນໄຂດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ. ການຂໍອະນຸມັດການລົງທຶນ ແມ່ນຮຽກຮ້ອງໃຫ້ມີການປະສານງານ ລະຫວ່າງ ບັນດາກະຊວງຕ່າງໆ ເຊິ່ງເຮັດໃຫ້ເປັນຂະບວນການແກ່ຍາວ. ນອກນີ້ ທ່ານກໍໄດ້ກ່າວເຖິງບັນຫາຊ່ອງວ່າງ ແລະ ພາລະບົດບາດທີ່ຊໍ້າຊ້ອນ ໃນການຈັດຕັ້ງປະຕິບັດລະບຽບກົດໝາຍ.

ການສົ່ງເສີມການຈັດຕັ້ງປະຕິບັດ ການລົງທຶນທີ່ມີຄວາມຮັບຜິດຊອບ ລວມມີ ການປັບປຸງນິຕິກຳຕ່າງໆໃຫ້ສອດຄ່ອງກັບ ບັນດາຫຼັກການ, ແທດເໝາະກັບສະພາບຕົວຈິງ ແລະ ຕອບສະໜອງຕາມຄວາມຕ້ອງການຂອງຊຸມຊົນ. ນອກຈາກນີ້ ຄວາມອາດສາມາດຂອງນັກລົງທຶນ ຕ້ອງໄດ້ຮັບການພັດທະນາ ເພື່ອໃຫ້ດຳເນີນທຸລະກິດໄປຕາມຫຼັກການຕ່າງໆ ພ້ອມທັງ ສ້າງຈິດສຳນຶກ ແລະ ຄວາມຮູ້ໃຫ້ແກ່ຊຸມຊົນ ກ່ຽວກັບ ສິດ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າ. ພ້ອມກັນນີ້ ບັນຫາການປະສານງານ ລະຫວ່າງ ກະຊວງຕ່າງໆຈະຕ້ອງໄດ້ຮັບການແກ້ໄຂ. ນອກຈາກນີ້ ເຄື່ອງມືໃນການຕິດຕາມໂຄງການລົງທຶນທີ່ມີແລ້ວນັ້ນ ເຊັ່ນ: ລະບົບການຕິດຕາມການລົງທຶນຂອງລັດ (IPM) ທີ່ສຸມໃສ່ການແກ້ໄຂບັນຫາ ຕ້ອງໄດ້ຮັບການພັດທະນາເພີ່ມເຕີມ ແລະ ນຳໃຊ້ຢ່າງກວ້າງຂວາງ ແລະ ສົ່ງເສີມໃຫ້ມີການປຶກສາຫາລື ລະຫວ່າງ ລັດຖະບານ, ບໍລິສັດ ແລະ ຊຸມຊົນ.

ທິດທາງໃນຕໍ່ໜ້າ:

- ສືບຕໍ່ປັບປຸງນິຕິກຳ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ສອດຄ່ອງກັບຄວາມຕ້ອງການຂອງຊຸມຊົນ - ຍົກສູງການມີສ່ວນຮ່ວມຂອງຊຸມຊົນ.
- ສ້າງຂີດຄວາມສາມາດໃຫ້ແກ່ນັກລົງທຶນ ເພື່ອເຮັດໃຫ້ການດຳເນີນທຸລະກິດສອດຄ່ອງກັບ ບົດແນະນຳ CFS-RAI ພ້ອມກັບສ້າງຈິດສຳນຶກ ແລະ ຄວາມຮູ້ໃຫ້ແກ່ຊຸມຊົນ ກ່ຽວກັບສິດ ແລະ ໜ້າທີ່ຮັບຜິດຊອບຂອງເຂົາເຈົ້າ.
- ແກ້ໄຂບັນຫາການປະສານງານ ລະຫວ່າງ ກະຊວງທີ່ກ່ຽວຂ້ອງ.
- ນຳໃຊ້ເຄື່ອງມືສຳລັບການຕິດຕາມໂຄງການລົງທຶນ ໂດຍສຸມໃສ່ການແກ້ໄຂບັນຫາ ແລະ ສົ່ງເສີມການປຶກສາຫາລື ລະຫວ່າງລັດຖະບານ, ບໍລິສັດ ແລະ ຊຸມຊົນ.

**ທ່ານ ວິໄລຮັກ ຈັນທະລາດ, ຫົວໜ້າພະແນກທຸລະກິດດ້ານກະສິກຳ, DoPF-MAF** ໄດ້ນຳສະເໜີ ກ່ຽວກັບ ຈຸດດີ, ສິ່ງທ້າທາຍ ແລະ ແຜນການຂອງພະແນກ. ຈຸດດີແມ່ນການປັບປຸງບັນດາລະບຽບການ ແລະ ນິຕິກຳຕ່າງໆ ເພື່ອປັບປຸງຂະບວນການອອກໃບອະນຸຍາດການລົງທຶນ ຜ່ານປະຕູດຽວເພື່ອເປັນ ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃນການດຶງດູດການລົງທຶນ. ອີກຈຸດດີໜຶ່ງແມ່ນ ກົດໝາຍ ແລະ ນິຕິກຳຕ່າງໆ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ໃນການຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນໂຄງການ ການລົງທຶນໃຫ້ເປັນເອກະພາບ. ປະຈຸບັນ ຍັງຂາດການປະສານງານ ລະຫວ່າງ ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ແລະ ຂາດແຜນການຈັດສັນ

ທີ່ດິນ. ທ່ານ ວິໄລຮັກ ຈັນທະລາດ ອະທິບາຍຕື່ມວ່າ ແຜນການຕໍ່ໜ້າແມ່ນການລິງເຜີຍແຜ່ບັນດານະໂຍບາຍ ແລະ ນິຕິກຳຕ່າງໆ ກ່ຽວກັບ ການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນທີ່ມີຄວາມຮັບຜິດຊອບ ຢູ່ຂັ້ນທ້ອງຖິ່ນ. ເປົ້າໝາຍລວມຢ່າງໜຶ່ງແມ່ນການປັບປຸງການປະສານງານ ແລະ ການຮ່ວມມື ລະຫວ່າງ ພາກສ່ວນຕ່າງໆ ແລະ ລະຫວ່າງ ຂັ້ນສູນກາງ ແລະ ທ້ອງຖິ່ນ ລວມເຖິງການຕິດຕາມ ແລະ ປະເມີນຜົນ ນັກລົງທຶນ.

ທິດທາງ ໃນຕໍ່ໜ້າ:

- ເຜີຍແຜ່ບັນດານະໂຍບາຍ ແລະ ນິຕິກຳຕ່າງໆ ກ່ຽວກັບ ການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນໃນຂົງເຂດທີ່ດິນທີ່ມີຄວາມຮັບຜິດຊອບ ຢູ່ຂັ້ນທ້ອງຖິ່ນ.

- ປັບປຸງບັນຊີ ໂຄງການລົງທຶນ ແລະ ທຸລະກິດດ້ານກະສິກຳ ແລະ ປ່າໄມ້ ແລະ ໃຫ້ຄົບຖ້ວນ ແລະ ມີຄວາມກົມກຽວກັບບັນຊີການລົງທຶນໃນຂະແໜງການອື່ນໆ.

- ສືບຕໍ່ປັບປຸງການປະສານງານ ແລະ ຮ່ວມມື ລະຫວ່າງ ຂະແໜງການ ແລະ ລະຫວ່າງ ຂັ້ນສູນກາງ ແລະ ທ້ອງຖິ່ນ.

- ປັບປຸງການຕິດຕາມ ແລະ ການປະເມີນຜົນ ໂຄງການລົງທຶນ ທີ່ໄດ້ຮັບການອະນຸມັດຜ່ານມາ.

### 4.4 ການຈັດຕັ້ງປະຕິບັດ RAI ຂອງພາກເອກະຊົນ

**ທ່ານ ນາງ ສຸໄພວັນ ທ່ຽງຈັນໄຊ, ຮອງອຳນວຍການບໍລິສັດບົວລະພາ ກະສິ-ປ່າໄມ້ ຈຳກັດ**, ໄດ້ອະທິບາຍເຫດຜົນຕົ້ນຕໍ ທີ່ທາງບໍລິສັດຂອງລາວ ລົງທຶນຢູ່ ສປປ ລາວ ເຊິ່ງມີ ຄວາມໝັ້ນຄົງທາງດ້ານການເມືອງ, ນະໂຍບາຍຂອງລັດຖະບານທີ່ຈະແຈ້ງ ໂດຍສະເພາະແມ່ນການລົງທຶນໃນຂະແໜງການກະສິກຳ - ປ່າໄມ້ ເຊິ່ງເປັນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້, ມີພື້ນທີ່ດິນເປົ່າຫວ່າງກວ້າງຂວາງ, ມີທ່າແຮງດ້ານແຮງງານ, ໃກ້ຕະຫຼາດ ແລະ ຜົນປະໂຫຍດຈາກເສັ້ນທາງລົດໄຟ ທີ່ຈະເປີດນຳໃຊ້ໄວໆນີ້.

ທ່ານ ນາງ ສຸໄພວັນ ທ່ຽງຈັນໄຊ ໄດ້ຍົກໃຫ້ເຫັນ ຈຸດດີ ແລະ ຂໍ້ຫຍຸ້ງຍາກ ຂອງນັກລົງທຶນ ໃນຂະແໜງກະສິກຳ-ປ່າໄມ້ ທີ່ພວມປະເຊີນຢູ່ໃນສປປ ລາວ. ນອກນີ້ ກໍຍັງໄດ້ເວົ້າເຖິງ ຄວາມຈຳເປັນ ໃນການປັບປຸງຂອດການປະສານງານ ແລະ ປັບປຸງບັນຫາ ບັນດາກອບນິຕິກຳ ທີ່ມີເນື້ອໃນບໍ່ສອດຄ່ອງກັນ.

ທ່ານ ນາງ ສຸໄພວັນ ທ່ຽງຈັນໄຊ ເວົ້າວ່າ ສປປ ລາວ ມີແນວໂນ້ມທີ່ດີ ໃນການກ້າວໄປສູ່ການລົງທຶນທີ່ມີຄວາມຮັບຜິດຊອບ. ຕົວຢ່າງ: ລັດຖະບານໄດ້ປັບປຸງກົດໝາຍທີ່ກ່ຽວຂ້ອງຫຼາຍສະບັບ ເຊັ່ນ: ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍການປົກປ້ອງສິ່ງແວດລ້ອມ ແລະ ກົດໝາຍວ່າດ້ວຍການນຳເຂົ້າ ແລະ ສົ່ງອອກ. ນອກຈາກນັ້ນ ໃນໄລຍະມໍ່ໆນີ້, ລັດຖະບານ ໄດ້ຮັບຮອງເອົາຍຸດທະສາດການເຕີບໂຕສີຂຽວ ແລະ ໃຫ້ຄຳໝັ້ນສັນຍາ ໃນການແກ້ໄຂຜົນກະທົບຈາກພາວະໂລກຮ້ອນ. ເຖິງຢ່າງໃດກໍຕາມ ຄວາມຫຍຸ້ງຍາກທີ່ບໍລິສັດ ທີ່ກຳລັງພົບພໍ້ຢູ່ແມ່ນ ເນື້ອໃນຂອງບັນດານິຕິກຳທີ່ກ່ຽວຂ້ອງຈຳນວນໜຶ່ງ ກ່ຽວກັບ ການເຊົ່າດິນ/ສຳປະທານທີ່ດິນຢູ່ໃນເຂດປ່າຊຸດໂຊມ ແມ່ນຍັງບໍ່ສອດຄ່ອງກັນ. ຂະບວນການໃນການສຳຫຼວດທີ່ດິນຂອງລັດແມ່ນຊັກຊ້າ ເຊິ່ງເປັນຂໍ້ຫຍຸ້ງຍາກໜຶ່ງທີ່ກະທົບຕໍ່ກັບ ແຜນການຂອງບໍລິສັດໃນການຂະຫຍາຍພື້ນທີ່ການປູກໄມ້ຂອງບໍລິສັດ.

ທ່ານໄດ້ແນະນຳໃຫ້ມີການປັບປຸງ ເຊັ່ນ: ການຫຼຸດຜ່ອນຂັ້ນຕອນຈຳນວນໜຶ່ງທີ່ເປັນອຸປະສັກ ຕໍ່ການດຳເນີນທຸລະກິດ ໂດຍໃຫ້ມີການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 02 ເຊິ່ງເປັນການອຳນວຍຄວາມສະດວກ ໃຫ້ແກ່ພາກທຸລະກິດ ແລະ ການລົງທຶນ. ທ່ານໄດ້ແນະນຳອີກວ່າ ຄວນມີນະໂຍບາຍສົ່ງເສີມການລົງທຶນ ໂດຍມີລະບຽບການທີ່ຮັດກຸມ, ເຂັ້ມງວດ ແລະ ໂປ່ງໃສ. ການປັບປຸງນິຕິກຳຂອງຂະແໜງການ ບໍ່ຄວນແກ່ຍາວ ຫຼື ຊໍ້າຊ້ອນກັນ.

### 4.5 ພາບລວມຂອງການລົງທຶນໃນຂົງເຂດທີ່ດິນ ແລະ ຄຸນນະພາບການລົງທຶນ ຢູ່ໃນ ສປປ ລາວ

ທ່ານ ນາງ ເພັດສະພອນ, ນັກຄົ້ນຄວ້າຈາກສູນເພື່ອການພັດທະນາ ແລະ ສິ່ງແວດລ້ອມ (CDE) ໄດ້ນຳສະເໜີ ກ່ຽວກັບ ຜົນການໄດ້ຮັບຈາກ ການວິເຄາະຂໍ້ມູນການຂຶ້ນບັນຊີໂຄງການເຊົ່າ ແລະ ສຳປະທານດິນລັດ ໃນຂະແໜງການກະສິກຳ ແລະ ປ່າໄມ້. ການລົງທຶນໃນຂົງເຂດທີ່ດິນ ໄດ້ຮັບການສົ່ງເສີມຢ່າງແຂງແຮງຈາກລັດຖະບານແຫ່ງ ສປປ ລາວ ແລະ ການລົງທຶນເຫຼົ່ານີ້ໄດ້ກາຍເປັນຕົວຂັບເຄື່ອນຕົ້ນຕໍ ໃຫ້ແກ່ການເຕີບໂຕສູງຂອງເສດຖະກິດຢູ່ ສປປ ລາວ ໃນໄລຍະຜ່ານມາ. ເຖິງແນວໃດກໍຕາມ, ການລົງທຶນເຫຼົ່ານີ້ກາຍເປັນສິ່ງທ້າທາຍອັນໜຶ່ງ ສຳລັບການພັດທະນາ ຂອງປະເທດ ໂດຍສະເພາະແມ່ນ ຜົນກະທົບດ້ານລົບ ຕໍ່ກັບຜູ້ນຳໃຊ້ທີ່ດິນ, ສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງປະຊາຊົນຢູ່ທ້ອງຖິ່ນ. ມີຫຼາຍກໍລະນີ ການລົງທຶນດັ່ງກ່າວ ພາໃຫ້ເກີດມີຂໍ້ຂັດແຍ່ງ ລະຫວ່າງເປົ້າໝາຍການພັດທະນາ ໂດຍສະເພາະແມ່ນລະຫວ່າງ ການພັດທະນາ ແລະ ການອະນຸລັກ, ຕົວຢ່າງ: ການສຳປະທານທີ່ດິນ ກວມເອົາພື້ນທີ່ປ່າສະຫງວນ. ທ່ານ ນາງ ເພັດສະພອນ ຍັງໄດ້ເນັ້ນໃຫ້ເຫັນຕື່ມວ່າ ເຖິງວ່າ ໂຄງການລົງທຶນໃໝ່ ໄດ້ຫຼຸດລົງນັບແຕ່ປີ 2009 ເປັນຕົ້ນມາ ແຕ່ການລົງທຶນໃນຂົງເຂດທີ່ດິນເຫຼົ່ານີ້ ອາດຍັງສືບຕໍ່ມີຄວາມສ່ຽງຕໍ່ກັບສະພາບແວດລ້ອມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ເນື່ອງຈາກວ່າ ໂຄງການລົງທຶນທີ່ໄດ້ອະນຸມັດຜ່ານມາ ຍັງບໍ່ທັນໄດ້ພັດທະນາເນື້ອທີ່ດິນ ທີ່ໄດ້ຮັບອະນຸມັດຈາກລັດທັງໝົດເທື່ອ. ໝາຍຄວາມວ່າ ນັກລົງທຶນ ຍັງສືບຕໍ່ບຸກເບີກພື້ນທີ່ດິນ ແລະ ຫັນປ່ຽນສະພາບການນຳໃຊ້ທີ່ດິນ ໄປສູ່ການປູກພືດເສດຖະກິດ.

ຜົນຈາກການປະເມີນຄຸນນະພາບການລົງທຶນ ໂດຍອີງໃສ່ຕົວຊີ້ວັດແບບຫຼາຍມິຕິ ລວມມີ ຜົນກະທົບ ດ້ານສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ ລວມທັງ ຄວາມສອດຄ່ອງກັບລະບຽບກົດໝາຍ ໄດ້ຊີ້ໃຫ້ເຫັນວ່າ ບໍ່ມີການລົງທຶນໃດທີ່ຈັດຕັ້ງປະຕິບັດໄດ້ດີໃນທຸກດ້ານ. ເຖິງວ່າການລົງທຶນຈະໄດ້ຮັບຄະແນນລວມ ກ່ຽວກັບ ຄຸນນະພາບການລົງທຶນສູງກໍ່ຕາມ ແຕ່ວ່າ ຄະແນນສູງດັ່ງກ່າວແມ່ນໄດ້ມາຈາກອົງປະກອບຕົວຊີ້ວັດໃດໜຶ່ງເທົ່ານັ້ນ. ຍ້ອນເຫດດັ່ງກ່າວ ຈິ່ງເຫັນວ່າມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ມີການເຈລະຈາເພື່ອໃຫ້ມີຄວາມສົມດູນ ລະຫວ່າງ ອົງປະກອບຕົວຊີ້ວັດຕ່າງໆ ກ່ຽວກັບ ຄຸນນະພາບການລົງທຶນ ໃນການບັນລຸເປົ້າໝາຍການລົງທຶນດ້ານກະສິກຳແບບຍືນຍົງ. FPIC ແລະ ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແມ່ນເຄື່ອງມືທີ່ສຳຄັນ ໃນການປົກປ້ອງການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຂອງຊຸມຊົນ ແຕ່ວ່າ ມັນບໍ່ພຽງພໍທີ່ຈະຮັບປະກັນ ກ່ຽວກັບ ຜົນປະໂຫຍດດ້ານບວກ ຈາກການລົງທຶນໃນຂົງເຂດທີ່ດິນ. FPIC ເຫັນວ່າມີຄວາມຈຳເປັນ ຈະຕ້ອງໄດ້ມີການປັບໃຫ້ສອດຄ່ອງກັບສະພາບເງື່ອນໄຂຕົວຈິງຂອງສປປ ລາວ ແລະ ການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແມ່ນມີຄວາມຈຳເປັນໃນການຕິດຕາມກວດກາໃນທຸກໄລຍະຂອງການລົງທຶນ.

ທ່ານ ນາງ ເພັດສະພອນ ສະຫຼຸບວ່າ ການລົງທຶນຂອງນັກລົງທຶນພາຍໃນ ຂະໜາດນ້ອຍ ຍັງສືບຕໍ່ເພີ່ມຂຶ້ນ ແລະ ຜົນກະທົບຂອງມັນຍັງສືບຕໍ່ເປັນສິ່ງທ້າທາຍໜຶ່ງ ຕໍ່ກັບ ບັນຫາຂໍ້ຂັດແຍ້ງ ກ່ຽວກັບ ສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງປະຊາຊົນຢູ່ທ້ອງຖິ່ນ. ເສັ້ນທາງໜຶ່ງທີ່ຈະສາມາດກ້າວໄປສູ່ການລົງທຶນໃນຂະແໜງກະສິກຳແບບຍືນຍົງ ແມ່ນຮຽກຮ້ອງໃຫ້ມີ ການຮ່ວມມື ຂອງຫຼາຍຂະແໜງການ ໂດຍຈະຕ້ອງໄດ້ມີ ການເຈລະຈາ ລະຫວ່າງ ຜູ້ມີສ່ວນກ່ຽວຂ້ອງ ເພື່ອໃຫ້ມີຄວາມ ສົມດູນ ແລະ ສົ່ງເສີມການຮຽນຮູ້ເຊິ່ງກັນ ແລະ ກັນ.

### 4.6 ຜົນໄດ້ຮັບທີ່ສຳຄັນ ຈາກວາລະທີ 1

ລັດຖະບານ, ພາກທຸລະກິດ ແລະ ອົງການຈັດຕັ້ງຕ່າງໆ ມີຄວາມເຫັນທີ່ຄ້າຍຄືກັນ ກ່ຽວກັບ ຂໍ້ຈຳກັດ ແລະ ສິ່ງທ້າທາຍຂອງການລົງທຶນໃນຂົງເຂດທີ່ດິນ ເຊິ່ງປະກອບມີ: **ຂາດການປະສານງານ ແລະ ການຮ່ວມມື, ຂະບວນການທີ່ແກ່ຍາວ ຫຼື ຊັກຊ້າ ແລະ ນິຕິກຳທີ່ບໍ່ຈະແຈ້ງ ຫຼື ຂັດກັນ.** CDE ຍົກໃຫ້ເຫັນວ່າ ການກຳນົດນິຍາມ ຄຳວ່າ ການລົງທຶນ “ທີ່ດີ” ໃຫ້ມີຄວາມຈະແຈ້ງ ແມ່ນມີຄວາມສຳຄັນຊຶ່ງຄວນຄຳນຶງເຖິງ ອົງປະກອບ ຜົນກະທົບ ດ້ານສິ່ງແວດລ້ອມ, ເສດຖະກິດ, ສັງຄົມ ແລະ ຄວາມສອດຄ່ອງກັບລະບຽບກົດ ໝາຍ. ພາກທຸລະກິດ ໄດ້ຍົກໃຫ້ເຫັນ ຜົນກະທົບ ຂອງບັນດາຄຳແນະນຳທີ່ບໍ່ຈະແຈ້ງ ເຊິ່ງເຮັດໃຫ້ເກີດຄວາມຊັກຊ້າ ແລະ ຂະບວນການທີ່ແກ່ຍາວ. ບັນດາກະຊວງ ແມ່ນໄດ້ຮັບຮູ້ເຖິງບັນດາສິ່ງທ້າທາຍ ແລະ ຄວາມຈຳເປັນໃນການປັບປຸງວຽກງານດັ່ງກ່າວໃຫ້ດີຂຶ້ນ.

ສິ່ງທ້າທາຍອື່ນໆທີ່ຜູ້ເຂົ້າຮ່ວມໄດ້ຍົກຂຶ້ນມາມີດັ່ງນີ້: ຂໍ້ມູນກ່ຽວກັບການລົງທຶນ ແມ່ນບໍ່ສາມາດເຂົ້າເຖິງໄດ້ ເຊິ່ງຂໍ້ມູນນີ້ຄວນໃຫ້ທຸກຄົນເຂົ້າເຖິງໄດ້. ອີງຕາມຫຼັກການແລ້ວ, ໂຄງການລົງທຶນທຸກປະເພດ ແມ່ນຈະຕ້ອງໄດ້ຜ່ານຂະບວນການອະນຸມັດ ໂດຍເລີ່ມຈາກການຮັບຮອງຈາກຊາວບ້ານ. ນິຕິກໍາກໍ່ໄດ້ກໍານົດໄວ້ວ່າ ໂຄງການລົງທຶນຈໍາເປັນຕ້ອງມີບົດສະເໜີໂຄງການ ເພື່ອສະແດງໃຫ້ເຫັນເຖິງຄວາມເປັນໄປໄດ້ ແລະ ຜົນປະໂຫຍດທີ່ຈະໄດ້ຮັບ. ນອກຈາກນີ້, ກໍຕ້ອງໄດ້ຜ່ານການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ມີການປຶກສາຫາລືກັບປະຊາຊົນທີ່ຈະໄດ້ຮັບຜົນກະທົບ. ໃນການເຂົ້າຮ່ວມກອງປະຊຸມປຶກສາຫາລືນັ້ນ, ປະຊາຊົນຄວນຮັບຂໍ້ມູນ ກ່ຽວກັບໂຄງການ ແລະ ມີໂອກາດສະເໜີຄວາມຄິດເຫັນ ກ່ຽວກັບ ໂຄງການທີ່ສະເໜີນັ້ນ. ເຖິງຢ່າງໃດກໍຕາມ, ໃນພາກປະຕິບັດ ມີພຽງແຕ່ນາຍບ້ານທີ່ໄດ້ເຂົ້າຮ່ວມກອງປະຊຸມ ປຶກສາຫາລືດັ່ງກ່າວ. ຫຼັງຈາກນັ້ນ ນາຍບ້ານກໍຈະໄປຂໍລາຍເຊັນຕ່າງຫາກກັບຊາວບ້ານວ່າໄດ້ເຂົ້າຮ່ວມປະຊຸມ ແລະ ໄດ້ເຫັນດີເຫັນພ້ອມແລ້ວ.ຈາກນັ້ນກໍໄດ້ສົ່ງລາຍເຊັນເຫຼົ່ານັ້ນໃຫ້ແກ່ ຜູ້ທີ່ດໍາເນີນການປະເມີນຜົນດ້ານສິ່ງແວດລ້ອມ. ສະນັ້ນ ເກືອບທຸກກໍລະນີ, ປະຊາຊົນຢູ່ພາຍໃນບ້ານບໍ່ໄດ້ຮັບຂໍ້ມູນລະອຽດຄົບຖ້ວນ ກ່ຽວກັບ ໂຄງການທີ່ຈະມາລົງທຶນ.

# 5 ເນື້ອໃນສໍາຄັນ ຂອງວາລະທີ 2

## 5.1 ການເຊົ່າທີ່ດິນ (ຄໍາແນະນໍາ ຂອງ MPI ສະບັບເລກທີ 0457) ແລະ ປະສົບການຈາກການຈັດຕັ້ງປະຕິບັດ (ກໍລະນີຂອງການປູກກ້ວຍຢູ່ແຂວງ ຫຼວງພະບາງ)

**ທ່ານ ສິນທະລອນ ສິນໂພໄຊ, ພະແນກແຜນການ ແລະ ການລົງທຶນແຂວງ ຫຼວງພະບາງ** ສະເໜີພາບລວມ ກ່ຽວກັບ ການລົງທຶນໃນການເຮັດສວນກ້ວຍ ຊຶ່ງມີທັງໝົດ 24 ບໍລິສັດທີ່ໄດ້ລົງທຶນເຮັດສວນປູກກ້ວຍ ກວມເອົາເນື້ອທີ 1.500 ຮຕ. ໃນນີ້ ມີຫຼາຍກວ່າເຄິ່ງໜຶ່ງທີ່ໄດ້ລົງທຶນເຮັດສວນປູກກ້ວຍ ຢູ່ຫຼວງພະບາງ ກ່ອນຈະມີຄໍາແນະນໍາ ສະບັບເລກທີ 0457 ປີ 2012. ໂຄງການປູກກ້ວຍສ່ວນໃຫຍ່ແມ່ນນັກລົງທຶນຈາກ ສປ ຈີນ ເຊົ່າດິນໂດຍກົງຈາກປະຊາຊົນ. ການອະນຸມັດ ບໍ່ໄດ້ຜ່ານຂະບວນການປະຕູດຽວ, ສະນັ້ນ ຫຼາຍກໍລະນີຈຶ່ງບໍ່ຄ່ອຍມີໃບອະນຸຍາດການລົງທຶນ. ເອກະສານຕ່າງໆເພື່ອປະກອບຄໍາຮ້ອງຂໍໃບອະນຸຍາດລົງທຶນ ຫຼື ການອະນຸມັດ ໃນແຕ່ລະພະແນກ/ຂະແໜງການ ແມ່ນບໍ່ເປັນເອກະພາບກັນ.

ນິຕິກໍາ ກ່ຽວກັບ ການອະນຸມັດໂຄງການລົງທຶນປູກກ້ວຍ ແມ່ນໄດ້ຮັບການປັບປຸງ ນັບແຕ່ປີ 2015 ເປັນຕົ້ນມາ. ຫຼັງຈາກມີຄໍາແນະນໍາສະບັບເລກທີ 0457 ຂອງ MPI (ຄໍາແນະນໍາ ວ່າດ້ວຍ ກົນໄກການອະນຸມັດການລົງທຶນ ແລະ ຄຸ້ມຄອງ ທີ່ດິນ ສໍາລັບການເຊົ່າ ຫຼື ສາປະທານທີ່ດິນ ປູກພືດ ປີ 2019), ອໍານາດການປົກຄອງຂັ້ນແຂວງ ໄດ້ມອບໝາຍ ໃຫ້ຫ້ອງການແຜນການ ແລະ ການລົງທຶນເມືອງຮັບຜິດຊອບການເຮັດສັນຍາການຄຸ້ມຄອງການປູກກ້ວຍ. ອີງໃສ່ການເຈລະຈາ ລະຫວ່າງ ອໍານາດການປົກຄອງຂັ້ນແຂວງ ແລະ ບໍລິສັດ ຈຶ່ງໄດ້ຕົກລົງເຫັນດີ ໃຫ້ມີເງິນຄໍ້າປະກັນເພື່ອການຟື້ນຟູທີ່ດິນ ພາຍຫຼັງສໍາເລັດການເຊົ່າທີ່ດິນ. ພ້ອມນີ້ ກໍຕົກລົງເຫັນດີ ກ່ຽວກັບ ງົບປະມານ ສໍາລັບການຕິດຕາມ ແລະ ກວດກາໂຄງການປູກກ້ວຍ ໂດຍກໍານົດ 300,000 ກີບ/ຮຕ. ໃນນີ້ 100,000 ກີບ/ຮຕ ແມ່ນມອບໃຫ້ພະແນກແຜນການ ແລະ ການລົງທຶນແຂວງ ແລະ 200,000 ກີບ/ຮຕ ແມ່ນມອບໃຫ້ຫ້ອງການແຜນການ ແລະ ການລົງທຶນເມືອງ. ສະນັ້ນ, ນັບແຕ່ນັ້ນມາ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດການຄຸ້ມຄອງໂຄງການລົງທຶນປູກກ້ວຍຢູ່ແຂວງ ຫຼວງພະບາງມີປະສິດທິຜົນ. ໄດ້ມີການສ້າງແບບຟອມສໍາລັບ ການໃຫ້ເຊົ່າ/ສໍາປະທານທີ່ດິນ ແລະ ສັນຍາຄຸ້ມຄອງການປູກກ້ວຍ ເຊິ່ງໄດ້ຮັບການສະໜັບສະໜູນຈາກອົງການ GIZ. ນອກນີ້ ກໍໄດ້ມີການບັງຄັບໃຊ້ຂໍ້ກໍານົດຕ່າງໆ ກ່ຽວກັບ ຜົນກະທົບດ້ານສິ່ງແວດລ້ອມ ເຊິ່ງໄດ້ຮັບການລາຍງານວ່າ ໄດ້ມີການຕິດຕາມກວດກາ ບັນດາບໍລິສັດລົງທຶນ ແລະ ນັກລົງທຶນໄດ້ເລີ່ມປະຕິບັດຕາມລະບຽບກົດໝາຍ.

ທ່ານ ສິນທະລອນ ສິນໂພໄຊ, ໄດ້ຍົກຄໍາຖາມຕໍ່ກອງປະຊຸມວ່າ ການປູກກ້ວຍທີ່ດໍາເນີນກ່ອນມີ ຄໍາແນະນໍາເລກທີ 0457 ຄວນຈະໃຫ້ສືບຕໍ່ຈ່າຍເງິນຄໍ້າປະກັນໃນມູນຄ່າ 5 ລ້ານກີບ/ຮຕ (ປະມານ 500 ໂດລາ) ສໍາລັບການຟື້ນຟູທີ່ດິນ ຫຼື ຄວນໃຫ້ພວກເຂົາເຈົ້າປະຕິບັດຕາມ ຄໍາແນະນໍາເລກທີ 0457 ຊຶ່ງຕ້ອງໄດ້ຈ່າຍ 750 ໂດລາສະຫະລັດ/ຮຕ.

ໃນໄລຍະສົນທະນາຖາມ-ຕອບ, ກອງປະຊຸມໃຫ້ຄວາມກະຈ່າງແຈ້ງວ່າ ຄວນໃຫ້ມີການປະຕິບັດຕາມຄໍາແນະນໍາເລກທີ 0457 ເຊິ່ງເປັນນິຕິກໍາທີ່ບັງຄັບໃຊ້ຢ່າງເປັນເອກະພາບແລ້ວ.

**<u>ປຶກສາຫາລື:</u>**

ໃນລະຫວ່າງການສົນທະນາ ໄດ້ມີການສົນທະນາບັນຫາທີ່ກ່ຽວຂ້ອງດັ່ງນີ້:

- "... ມັນເປັນໄປໄດ້ແນວໃດທີ່ນັກລົງທຶນ ເລີ່ມຈັດຕັ້ງປະຕິບັດ ໂຄງການລົງທຶນຢູ່ຂັ້ນທ້ອງຖິ່ນ ໂດຍບໍ່ມີການອະນຸມັດຢ່າງເປັນທາງການກ່ອນ? ນັກລົງທຶນສາມາດຊອກທີ່ດິນ ແລະ ເຊົ່າດິນໂດຍກົງກັບຊາວບ້ານ ເພື່ອຜະລິດກະສິກໍາຂະໜາດນ້ອຍ?. ເປັນຫຍັງຈິ່ງບໍ່ມີການປັບໄໝ ຫຼື ການລົງໂທດ?..."

- ຄໍາຕອບ ສໍາລັບຄໍາຖາມນີ້: ໃນເມື່ອກ່ອນ, ຍ້ອນວ່າ ລັດຖະບານບໍ່ທັນໄດ້ມີນິຕິກໍາ ເຊັ່ນ: ຄໍາແນະນໍາເລກທີ 0457. ຄວາມຮັບຮູ້ຂອງຊຸມຊົນ ແລະ ພະນັກງານຂັ້ນເມືອງ ແລະ ຂັ້ນແຂວງກໍຍັງຈໍາກັດຫຼາຍ. ບໍ່ເຄີຍມີການເຊົ່າດິນແບບນີ້ມາກ່ອນ. ທຸກຝ່າຍທີ່ມີສ່ວນຮ່ວມໃນການອະນຸມັດ ກໍ່ບໍ່ໄດ້ມີການພິຈາລະນາຢ່າງຖີ່ຖ້ວນ ຍ້ອນວ່າ ເຂົາເຈົ້າເນັ້ນໃສ່ແຕ່ຜົນປະໂຫຍດໄລຍະສັ້ນ ຫຼາຍກວ່າຜົນກະທົບໄລຍະຍາວ. ຕົວຢ່າງ: ຄວາມຮັບຜິດຊອບໃນການຟື້ນຟູທີ່ດິນ ຫຼື ການຈັດສົນທີ່ດິນ ຄືນໃຫ້ແກ່ເຈົ້າຂອງເດີມຫຼັງຈາກການລົງທຶນປູກກ້ວຍສິ້ນສຸດລົງ ແມ່ນມີຄວາມຫຍຸ້ງຍາກ ທີ່ຈະປັບໄໝ ຫຼື ລົງໂທດ ເນື່ອງຈາກວ່າສັນຍາເຊົ່າດິນເຫຼົ່ານີ້ບໍ່ໄດ້ຜ່ານຂະບວນການທາງການ ແລະ ກໍຍ້ອນບໍ່ມີນິຕິກໍາຮອງຮັບ .

**ທ່ານ ນາງ ພູວອນ, ຜູ້ປະສານງານໂຄງການ RAI ຈາກກົມສົ່ງເສີມການລົງທຶນ** ໄດ້ແລກປ່ຽນກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດຄໍາແນະນໍາເລກທີ 0457 ຢູ່ແຂວງ ຫຼວງພະບາງ. ຂັ້ນຕອນ ແລະ ການແບ່ງຄວາມຮັບຜິດຊອບ ລະຫວ່າງ ຂະແໜງການກະສິກໍາ ແລະ ປ່າໄມ້, ຂະແໜງ ການແຜນການ ແລະ ການລົງທຶນ ແລະ ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແມ່ນມີຄວາມຈະແຈ້ງຂຶ້ນແລ້ວ. ອໍານາດການປົກຄອງຂັ້ນແຂວງ ສໍາເລັດການເຈລະຈາກັບນັກລົງທຶນ ກ່ຽວກັບ ເງິນຄໍ້າປະກັນການຟື້ນຟູທີ່ດິນ ຕາມຄໍາແນະນໍາເລກທີ 0457 ແລະ ສາມາດມີເງິນ ໃນການລົງຕິດຕາມກວດກາ. ສໍາລັບຄໍາຖາມທີ່ວ່າ ກໍລະນີ ທີ່ການລົງທຶນເກີດຂຶ້ນກ່ອນຄໍາແນະນໍາເລກທີ 0457 ນັ້ນຈະໃຫ້ປະຕິບັດແນວໃດ, ອັນນີ້ແມ່ນແນະນໍາໃຫ້ປະຕິບັດຕາມຂໍ້ກໍານົດ ຂອງຄໍາແນະນໍາເລກທີ 0457 ເພື່ອໃຫ້ການຈັດຕັ້ງປະຕິບັດມີຄວາມເປັນເອກະພາບກັນ ທຸກໂຄງການລົງທຶນ.

### 5.2 ການເຮັດສັນຍາຜູກພັນ ໃນການຜະລິດກະສິກໍາ

**ທ່ານ ແສງທອງ ສຸທໍາມະວົງ, ຈາກ IPD ແລະ ດຣ. ໂຣເບີດ ໂຄ (Robert Cole), ທີ່ປຶກສາດ້ານ RAI, ຈາກໂຄງການຄຸ້ມຄອງບໍລິຫານທີ່ດິນພາກພື້ນແມ່ນໍ້າຂອງ (MRLG)** ໄດ້ແລກປ່ຽນກັບກອງປະຊຸມ ກ່ຽວກັບ ທັດສະນະຂອງຊາວກະສິກອນ, ນັກລົງທຶນ ແລະ ອົງການຈັດຕັ້ງຂອງລັດ ກ່ຽວກັບ ການສ້າງຕັ້ງການເຮັດສັນຍາຜູກພັນໃນການຜະລິດກະສິກໍາ ອີງໃສ່ການເກັບກໍາຂໍ້ມູນຢູ່ພາກສະໜາມຢູ່ແຂວງ ຫຼວງພະບາງໃນປີ 2021.

ຊາວກະສິກອນບໍ່ທັນຄຸ້ນເຄີຍກັບຂໍ້ກໍານົດຂອງສັນຍາ ແລະ ເຕັກນິກ ໃນການຜະລິດ. ເຂົາເຈົ້າບໍ່ແນ່ໃຈ ກ່ຽວກັບ ນິຕິບາດຂອງລັດ ແລະ ຂັ້ນຕອນການປະກອບເອກະສານທີ່ກ່ຽວຂ້ອງ. ຊາວກະສິກອນ ເຊື່ອວ່າ ແມ່ຍິງຈໍາເປັນຕ້ອງມີບົດບາດທີ່ສະເໝີພາບໃນການຮ່ວມເຊັນສັນຍາ ແລະ ຄຸ້ມຄອງສັນຍາ.

ນັກລົງທຶນ ຍັງບໍ່ສາມາດຮູ້ໄດ້ຊັດເຈນ ກ່ຽວກັບ ຂະບວນການຈົດທະບຽນສັນຍາ ໃນການເຮັດສັນຍາຜູກພັນໃນການຜະລິດກະສິກໍາ. ເຂົາເຈົ້າມີຄວາມເປັນກັງວົນວ່າ ອາດບໍ່ມີຈໍານວນຄົວເຮືອນຫຼາຍພໍທີ່ຈະເຂົ້າຮ່ວມໃນສັນຍາການຜະລິດ. ຊຶ່ງອາດສົ່ງຜົນເຮັດໃຫ້ບໍ່ມີ

ການຜະລິດທີ່ພຽງພໍ. ນັກລົງທຶນ ຍັງບອກຕື່ມວ່າ ລັດຖະບານຈຳເປັນ ຈະຕ້ອງໄດ້ເຜີຍແຜ່ ກ່ຽວກັບ ນະໂຍບາຍຕ່າງໆໃຫ້ແກ່ຊາວກະສິກອນ ແລະ ສະໜັບສະໜູນການຄຸ້ມຄອງ ການເຮັດສັນຍາຜູກພັນ ໃນການຜະລິດກະສິກຳ.

ໃນທັດສະນະ ຂອງລັດຖະບານ ກ່ຽວກັບ ການເຮັດສັນຍາຜູກພັນ ໃນການຜະລິດກະສິກຳ,ລັດຄວນມີສ່ວນຮ່ວມໃນການຮ່າງສັນຍາ ແລະ ບັງຄັບໃນການຈັດຕັ້ງປະຕິບັດສັນຍາ, ລັດຈະຕ້ອງສ້າງຈິດສຳນຶກໃຫ້ແກ່ປະຊາຊົນໄດ້ຮັບຮູ້ ກ່ຽວກັບ ຄວາມສຳຄັນຂອງສັນຍາ. ທຸກໆພາກສ່ວນ ແມ່ນແນະນຳໃຫ້ມີການປັບປຸງ ລະບຽບການຂອງຂະແໜງການ. ໂດຍແນະນຳໃຫ້ກຳນົດແຈ້ງພາລະບົດບາດ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ ຂອງລັດ ແລະ ສ້າງຂີດຄວາມສາມາດໃຫ້ແກ່ຂັ້ນທ້ອງຖິ່ນໃນການຄຸ້ມຄອງການເຮັດສັນຍາຜູກພັນ ໃນການຜະລິດກະສິກຳ. ອີກຂໍ້ແນະນຳ ໜຶ່ງ ຄືໃຫ້ມີກົດໝາຍ ແລະ ນິຕິກຳສະເພາະ ກ່ຽວກັບການເຮັດສັນຍາຜູກພັນ ໃນການຜະລິດກະສິກຳ ເຊິ່ງປະຈຸບັນແມ່ນຍັງບໍ່ທັນມີເທື່ອ.

## 5.3 ເຄື່ອງມືຕິດຕາມໂຄງການລົງທຶນ (IPM) ແລະ ເວທີແລກປ່ຽນ ລະຫວ່າງ ນັກລົງທຶນ

**ທ່ານ ນາງ ຂັນແກ້ວ ອຸປຣະວັນ, ຫົວໜ້າທີມ ສົ່ງເສີມຄຸນນະພາບການລົງທຶນຂອງແຜນງານທີ່ດິນ, GIZ**, ໄດ້ນຳສະເໜີວ່າ ເຄື່ອງມື IPM ເປັນເຄື່ອງມື ຕິດຕາມບັນດາໂຄງການລົງທຶນ ໂດຍໄດ້ສຳພາດ ແລະ ເກັບກຳຂໍ້ມູນຈາກນັກລົງທຶນ, ແຮງງານ/ກາມະກອນ ແລະ ຊຸມຊົນ. ອົງປະກອບຫຼັກຂອງ IPM ແມ່ນເພື່ອສະໜັບສະໜູນ ອົງການຈັດຕັ້ງຂອງລັດ ຢູ່ຂັ້ນແຂວງ ແລະ ເມືອງ ໃນການຕິດຕາມຢ່າງເປັນລະບົບກ່ຽວກັບ ຄວາມສອດຄ່ອງທາງດ້ານລະບຽບກົດໝາຍ ແລະ ການປະຕິບັດທີ່ດີ ໃນການດຳເນີນທຸລະກິດ ຂອງນັກລົງທຶນ. ຂະບວນການຕິດຕາມ ລວມມີການກວດກາປະຈຳປີ ວ່າບໍລິສັດໄດ້ປະຕິບັດຕາມນິຕິກຳ ກ່ຽວກັບ ດ້ານສິ່ງແວດລ້ອມ, ການເຄົາລົບການຖືຄອງທີ່ດິນ ແລະ ສັນຍາກ່ຽວກັບທີ່ດິນ ຄືແນວໃດ ແລະ ການປະຕິບັດຕໍ່ແຮງງານ ແລະ ຊຸມຊົນ ຂອງນັກລົງທຶນ. ເພື່ອຮັບປະກັນວ່າ ຄຳຕຳນິຕິຊົມ ແລະ ຂໍ້ສະເໜີແນະ ຕ່າງໆ ຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ໄດ້ຖືກບັນທຶກຢ່າງເປັນລະບົບ ຈຶ່ງໄດ້ມີການສ້າງ ບົດບັນທຶກການຕິດຕາມ (MOM) ໃນຮູບແບບດິຈິຕອນ. ວິທີການ ຂອງ IPM ຖືເອົາຫຼັກການທີ່ວ່າ ຜູ້ທີ່ມີສ່ວນກ່ຽວຂ້ອງ ສາມຝ່າຍ (ນັກລົງທຶນ, ຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ລັດ) ມີບົດບາດສຳຄັນ ໃນການບັນລຸເປົ້າໝາຍຄື ເຮັດໃຫ້ການລົງທຶນມີ ຜົນປະໂຫຍດຮ່ວມກັນ. ຜົນໄດ້ຮັບຈາກ IPM ຈະນຳໄປລາຍງານ ໃຫ້ແກ່ການນຳ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອໃຫ້ມີການປັບປຸງເຮັດໃຫ້ການລົງທຶນມີຄວາມຮັບຜິດຊອບ.

<u>ຄຳເຫັນຕົວແທນຈາກ IPD-MPI - ທ່ານ ພອນທະວົງ ສີງຫາລາດ</u>

ທ່ານ ພອນທະວົງ ສິງຫາລາດ ກ່າວຂອບໃຈຕໍ່ກັບແຜນງານທີ່ດິນ ຂອງ GIZ ສຳລັບການຊ່ວຍເຫຼືອ ແລະ ສະໜັບສະໜູນການສ້າງເຄື່ອງມືຕິດຕາມນີ້ ເຊິ່ງມີລັກສະນະບໍ່ສັບສົນ, ສະດວກໃນການນຳໃຊ້ ແລະ ມີປະສິດທິຜົນ. ປະຈຸບັນ ພະນັກງານຂັ້ນເມືອງ ແລະ ແຂວງ ສາມາດນຳໃຊ້ເຄື່ອງມື IPM ດັ່ງກ່າວໄດ້ເປັນຢ່າງດີ. ມັນເປັນເຄື່ອງມືທີ່ເປັນລະບົບ ແລະ ມີປະໂຫຍດ ເພາະສາມາດຊ່ວຍໃຫ້ຂະແໜງການ ຂອງລັດ ແລະ ພວກເຮົາ ເພື່ອລາຍງານ ແລະ ແກ້ໄຂບັນຫາໄດ້ ຢ່າງທັນກັບສະພາບການ. ເຊິ່ງລວມມີຂັ້ນຕອນຕ່າງໆໃນການແກ້ໄຂບັນຫາໃຫ້ແກ່ຊຸມຊົນ ແລະ ນັກລົງທຶນ. ກົມສົ່ງເສີມການລົງທຶນ IPD ມີແຜນຈະເຜີຍແຜ່ IPM ໃຫ້ແກ່ແຂວງອື່ນໆ ແລະ ແນະນຳເຄື່ອງມືນີ້ໃຫ້ແກ່ ຄູ່ຮ່ວມພັດທະນາອື່ນໆທີ່ເຮັດວຽກ ກ່ຽວກັບ RAI. ໃນປີ 2021 IPD ໄດ້ເລີ່ມຂະຫຍາຍການນຳໃຊ້ເຄື່ອງມືນີ້ ໄປສູ່ແຂວງອື່ນໆທີ່ບໍ່ແມ່ນແຂວງເປົ້າໝາຍຂອງໂຄງການ RGIL. ຕົວຢ່າງ: ກອງປະຊຸມເຜີຍແຜ່ທີ່ໄດ້ຈັດຂຶ້ນຢູ່ແຂວງ ບໍລິຄຳໄຊ ແລະ ທຸກໆເມືອງຂອງແຂວງ ວຽງຈັນ. ກອງປະຊຸມດັ່ງກ່າວແມ່ນໄດ້ຮັບການຕອບຮັບເປັນຢ່າງດີຈາກພາກສ່ວນຕ່າງໆທີ່ໄດ້ເຂົ້າຮ່ວມ. ເຂົາເຈົ້າເຫັນວ່າ ມັນເປັນເຄື່ອງມືທີ່ໜ້າສົນໃຈ ແລະ ສຳຄັນຫຼາຍ.

<u>ຄຳເຫັນຈາກ ທ່ານ ວິໄລຣັກ ຈັນທະລາດ, ຕາງໜ້າ DoPF-MAF</u>

ພວກເຮົາມີເຄື່ອງມືໃນການຕິດຕາມ ແລະ ປະເມີນຜົນໂຄງການ ໃນຂະແໜງການກະສິກຳ ໂດຍໄດ້ຮັບການອະນຸມັດຈາກກະຊວງ ແຕ່ວ່າ ແບບຟອມໃຊ້ ແມ່ນມີລັກສະນະຂ້ອນຂ້າງລວມໆ. ແຕ່ວ່າ ການດຳເນີນທຸລະກິດໃນຂະແໜງກະສິກຳ ແລະ ປ່າໄມ້ ພັດມີລັກສະນະສະເພາະທີ່ແຕກຕ່າງກັນ. ສະນັ້ນ DoPF ຈຶ່ງມີຄວາມຕ້ອງການ ການສະໜັບສະໜູນ ເພື່ອພັດທະນາເຄື່ອງມືທີ່ບໍ່ສັບສົນ ແລະ ມີປະສິດທິຜົນ ສຳລັບຂະແໜງການກະສິກຳ. ເຄື່ອງມືທີ່ນຳໃຊ້ປະຈຸບັນແມ່ນເປັນພື້ນຖານສຳລັບການຕິດຕາມໂຄງການລົງທຶນ ວ່າເຂົາເຈົ້າໄດ້ປະຕິບັດຕາມສັນຍາທີ່ໄດ້ເຊັນກັບລັດຖະບານຄືແນວໃດ, ເຂົາເຈົ້າໄດ້ຈັດຕັ້ງປະຕິບັດ ຕາມກອບເວລາທີ່ກຳນົດໄວ້ບໍ່ ແລະ ເຂົາເຈົ້າໄດ້ປະຕິບັດຕາມບົດສະເໜີໂຄງການ ຫຼື ບໍ່. ພວກເຮົາເຮັດວຽກຢ່າງໃກ້ຊິດກັບ ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ພະແນກການອື່ນໆທີ່ກ່ຽວຂ້ອງ ເພື່ອຈັດຕັ້ງການລົງໄປຕິດຕາມໂຄງການລົງທຶນ. ຜົນຂອງການລົງໄປຕິດຕາມ ແມ່ນໃຊ້ເປັນບ່ອນອີງໃນການພິຈາລະນາການຕໍ່ໃບອະນຸຍາດດຳເນີນທຸລະກິດ ໃນແຕ່ລະປີ. ສະນັ້ນ, ທາງຂະແໜງການກະສິກຳ ແລະ ປ່າໄມ້ ຈຶ່ງເຫັນວ່າ ຄວນມີເຄື່ອງມືທີ່ບໍ່ສັບສົນ ແລະ ມີປະສິດທິຜົນ ເພື່ອໃຫ້ພວກເຮົາສາມາດຊອກຫາວິທີການແກ້ໄຂບັນຫາຢ່າງເໝາະສົມ ແລະ ທັນກັບສະພາບການ.

<u>**ປຶກສາຫາລື:**</u>

ຄຳຖາມສຳຄັນ ທີ່ໄດ້ຍົກຂຶ້ນມາປຶກສາຫາລື ມີດັ່ງນີ້:

- "ພາກສ່ວນໃດ ຫຼື ຜູ້ໃດ ທີ່ອາດເປັນຕົວແປ ໃນການປ່ຽນແປງ ທີ່ອາດນຳໄປສູ່ຜົນໄດ້ຮັບທາງດ້ານບວກ ຈາກການລົງທຶນໃນຂົງເຂດທີ່ດິນ?"

  ຈາກເບື້ອງລັດ, ທີມງານຂັ້ນແຂວງ ແລະ ຂັ້ນເມືອງ, ໂດຍສະເພາະ ພະແນກການຂັ້ນແຂວງ, ຫ້ອງການຂັ້ນເມືອງ ຂອງຂະແໜງແຜນການ ແລະ ການລົງທຶນ, ກະສິກຳ ແລະ ປ່າໄມ້ ລວມທັງ ສະຫະພັນແມ່ຍິງ. ຫ້ອງການແຜນການ ແລະ ການລົງທຶນ (ແຂວງ ແລະ ເມືອງ) ແມ່ນເປັນຈຸດປະສານງານ ແລະ ເປັນຜູ້ຕິດຕໍ່ໂດຍກົງກັບນັກລົງທຶນ.

  ຢູ່ຂັ້ນສູນກາງ ພວກເຮົາເຮັດວຽກກັບ ກົມສົ່ງເສີມການລົງທຶນ ແລະ ສູນຝຶກອົບຮົມ. ສູນຝຶກອົບຮົມເປັນຝ່າຍພັດທະນາຊັບພະຍາກອນມະນຸດ, ຜູ້ອຳນວຍຄວາມສະດວກ ເຊິ່ງຈະສາມາດຊ່ວຍອຳນວຍຄວາມສະດວກ ລະຫວ່າງ ພາກລັດ ແລະ ເອກະຊົນ. ການບັງຄັບໃຊ້ກົດໝາຍການລົງທຶນ, ຄຳແນະນຳ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງ ຄວນແມ່ນໜ້າທີ່ຂອງພາກສ່ວນທີ່ກ່ຽວຂ້ອງ ຢູ່ໃນລະດັບ ນະໂຍບາຍ, ອົງການຈັດຕັ້ງທີ່ກ່ຽວຂ້ອງຄວນຈັດຕັ້ງປະຕິບັດນິຕິກຳຕ່າງໆ ຕົວຢ່າງ: ນິຕິກຳທີ່ກ່ຽວຂ້ອງກັບການເຮັດກະສິກຳແບບມີສັນຍາຜູກພັນ. ການຄຸ້ມຄອງນັກລົງທຶນ ແມ່ນໜ້າທີ່ຂອງ MPI.

### 5.4 ກົນໄກແກ້ໄຂຄຳຮ້ອງທຸກ ຂອງບໍລິສັດ

**ທ່ານ ພອນສະຫວັນ ຈິນດາມະນີ, ຜູ້ຈັດການດ້ານ CSR ຈາກບໍລິສັດແມ່ຂອງປູກໄມ້ ຈຳກັດ** ໄດ້ນຳສະເໜີວ່າ ບໍລິສັດແມ່ຂອງປູກໄມ້ ໄດ້ພັດທະນາກົນໄກ ສຳລັບ ການບໍລິຫານຈັດການກັບ ຂໍ້ຮຽກຮ້ອງ, ຄຳຮ້ອງທຸກ ແລະ ການຕິດຕໍ່ສື່ສານ (GCCM) ເພື່ອເຮັດໃຫ້ສາມາດບໍລິຫານຈັດການ ກ່ຽວກັບ ຂໍ້ຮຽກຮ້ອງ, ຄຳເຫັນ ແລະ ຂໍ້ສະເໜີ ຢ່າງເປັນລະບົບ. ບໍລິສັດ ຈະຮັກສາຄຳເຫັນທັງໝົດເປັນຄວາມລັບ. ທ່ານ ພອນສະຫວັນ ຈິນດາມະນີ ກ່າວຕື່ມວ່າ ລະບົບຂອງພວກເຮົາ ຈະບໍ່ເຮັດໃຫ້ຜູ້ສົ່ງຂໍ້ຄິດເຫັນ ມີຄວາມກັງວົນກ່ຽວກັບ ຜົນສະທ້ອນທີ່ຈະຕາມມາ. ການເກັບກຳຄຳຄິດເຫັນນີ້ ມີ 2 ຮູບແບບ ຄື: ໂທລະສັບຫາສາຍດ່ວນ GCCM ຂອງບໍລິສັດໂດຍກົງ, ຫຼື ຂຽນແບບຟອມ GCCM". ສ່ວນຫຼາຍ ຜູ້ສະເໜີຄຳເຫັນ ຈະໂທຫາບໍລິສັດ ແລະ ຂໍຄຳແນະນຳ ຈາກບໍລິສັດໂດຍກົງ. ປະຊາຊົນ ສາມາດຕື່ມແບບຟອມປະກອບຄຳເຫັນ ແລ້ວສົ່ງ ແບບຟອມ ໃຫ້ແກ່ອຳນາດການປົກຄອງບ້ານ.

ໂທລະສັບສາຍດ່ວນຂອງກົນໄກ GCCM ຈະເປີດໃຫ້ບໍລິການ 24 ຊົ່ວໂມງ, ໃນຂະນະທີ່ ແບບຟອມ IN-GSCM ມີຢູ່ທາງອອນລາຍ ຊຶ່ງສາມາດພິມອອກມາໄດ້. ການໃຫ້ຄຳຕຳນິຕິຊົມ ພາຍໃນບໍລິສັດ ແມ່ນຈະມີກ່ອງແດງຕິດຢູ່ຫ້ອງການເພື່ອໃຫ້ພະນັກງານປ່ອນຄຳເຫັນຂອງຕົນໃສ່. ເມື່ອເກັບກຳຂໍ້ມູນແລ້ວ, ພະນັກງານ ຫຼື ພະແນກທີ່ກ່ຽວຂ້ອງ ຈະໄດ້ຕິດຕໍ່ໂດຍກົງ ຫາຜູ້ສົ່ງຄຳຄິດເຫັນເພື່ອປຶກສາ ແລະ ແກ້ໄຂບັນຫາ. ທຸກໆບັນຫາຈະໄດ້ ມອບໝາຍໃຫ້ຜູ້ຈັດການທີ່ກ່ຽວຂ້ອງ ໂດຍນຳໃຊ້ລະບົບຖານຂໍ້ມູນພາຍໃນ ທີ່ເອີ້ນວ່າ “PeopleTray”. ທຸກໆຂະບວນການ ຂອງກົນໄກແກ້ໄຂຄຳຮ້ອງທຸກຈະຮັກສາເປັນຄວາມລັບ. ຜູ້ທີ່ມີສ່ວນກ່ຽວຂ້ອງໃນຂັ້ນຕອນການແກ້ໄຂບັນຫາ ແມ່ນໄດ້ຮັບການຝຶກອົບຮົມ ແລະ ມີປະສົບການ, ສະນັ້ນ ເຂົາເຈົ້າຈະຮູ້ວິທີການ ຈັດການ ກັບຄຳຄິດເຫັນຢ່າງເປັນມືອາຊີບ. ຖ້າວ່າເປັນກໍລະນີຮີບດ່ວນ, ການແກ້ໄຂແຕ່ລະກໍລະນີ ຈະໃຊ້ເວລາປະມານ 1-2 ອາທິດ.

ມີການພິຈາລະນາກ່ຽວກັບການສົ່ງເສີມຄວາມສະເໝີພາບບົດບາດຍິງ-ຊາຍ. ບໍລິສັດແມ່ຂອງປູກໄມ້ ມີນະໂຍບາຍຕໍ່ຕ້ານ ພຶດຕິກຳ ທີ່ເປັນການລ່ວງລະເມີດ ຫຼື ຂົ່ມຂູ່ ແລະ ພວກເຮົາມີພະນັກງານລະດັບອາວຸໂສຮັບຜິດຊອບໃນການຈັດຕັ້ງປະຕິບັດນະໂຍບາຍດ້ານນີ້ສະເພາະ.

**ຄຳເຫັນຕໍ່ບົດນຳສະເໜີ ຂອງບໍລິສັດ- ທ່ານ ເຮືອງສະຫວັນ ແສງຄຳປອງ, ຮອງຫົວໜ້າພະແນກຮ່ວມມືການລົງທຶນ, IPD-MPI**

ບັນຫາທີ່ເກີດຂຶ້ນຈາກການລົງທຶນໃນຂົງເຂດທີ່ດິນ ແມ່ນໄດ້ຮັບການແກ້ໄຂ ໂດຍຫຼາຍຂະແໜງການ ອີງ ຕາມປະເພດຂອງບັນຫາ. ຄະນະສົ່ງເສີມ ແລະ ຄຸ້ມຄອງ ການລົງທຶນ ເປັນຈຸດປະສານງານ ໃນການແກ້ໄຂຄຳຮ້ອງທຸກທີ່ຕິດພັນກັບໂຄງການລົງທຶນ. ການແກ້ໄຂການຮ້ອງທຸກ ໃນແຕ່ລະກໍລະນີແມ່ນອີງຕາມສັນຍາການສຳປະທານ.

ບັນຫາທີ່ໄດ້ຮັບການຮ້ອງທຸກສ່ວນຫຼາຍ ແມ່ນຕິດພັນກັບບັນຫາທີ່ດິນ ຕົວຢ່າງ: ບັນຫາເຂດແດນທັບຊ້ອນກັນ ແລະ ບໍ່ຈະແຈ້ງ. ບັນຫາທີ່ຕິດພັນກັບທີ່ດິນ ແມ່ນໄດ້ຮັບການແກ້ໄຂໂດຍ ຂະແໜງການທີ່ກ່ຽວຂ້ອງຂອງລັດ ໃນຂະແໜງທີ່ດິນ. ບັນຫາຈາກໂຄງການລົງທຶນທີ່ຕິດພັນກັບສິ່ງແວດລ້ອມ ແມ່ນພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເປັນຜູ້ແກ້ໄຂ. ບັນຫາກ່ຽວກັບແຮງງານ ເຊັ່ນ: ການຂາດມາດຕະການຄວາມປອດໄພຂອງແຮງງານໃນສະພາບແວດລ້ອມເຮັດວຽກທີ່ເປັນອັນຕະລາຍ, ຂາດສັນຍາການຈ້າງງານ ແລະ ຂາດສະຫວັດດີການ ແມ່ນ ພະແນກແຮງງານ ແລະ ສະຫວັດດີການສັງຄົມເປັນຜູ້ແກ້ໄຂ.

ທ່ານ ເຮືອງສະຫວັນ ແສງຄຳປອງ ກ່າວວ່າ ນີ້ແມ່ນກົນໄກການຄຸ້ມຄອງຂອງລັດຖະບານ. ບັນຫາຕ່າງໆຈະໄດ້ຮັບການແກ້ໄຂຈາກຂັ້ນທ້ອງຖິ່ນ ແຕ່ຖ້າຫາກບໍ່ສາມາດແກ້ໄຂໄດ້ ແມ່ນຈະສະເໜີຫາຂັ້ນສູນກາງ.

ກົນໄກຂອງລັດຖະບານ ເປັນກົນໄກເສີມ ໃຫ້ແກ່ ກົນໄກແກ້ໄຂຄຳຮ້ອງທຸກຂອງບໍລິສັດ. ປະຊາຊົນອາດຈະຕິດຕໍ່ຫາບໍລິສັດກ່ອນ ແລະ ຖ້າບັນຫາບໍ່ໄດ້ຮັບການແກ້ໄຂ ຈິ່ງມາຫາພາກລັດເພື່ອຊ່ວຍເຫຼືອແກ້ໄຂບັນຫາ. ບໍລິສັດ ອາດມີຊັບພະຍາກອນຫຼາຍກວ່າ ໃນການແກ້ໄຂໃຫ້ຄຳຮ້ອງທຸກ. ເຖິງແນວໃດກໍ່ຕາມ ລັດຖະບານຄວນເປັນຈຸດປະສານງານ ເພື່ອເປັນສູນລວມ ຂອງເຄື່ອງມື ແລະ ວິທີການ ເພື່ອໃຊ້ໃນການແກ້ໄຂບັນຫາ ແລະ ຊີ້ນຳຂະບວນການ ໂດຍການປະສານງານກັບພາກສ່ວນຕ່າງໆ ເພື່ອໃຫ້ມີການປັບປຸງ ແລະ ພັດທະນາເຄື່ອງມື ດີຂຶ້ນ.

ຖ້າມີການນຳໃຊ້ຂະບວນການຢ່າງມີປະສິດທິຜົນ, ບັນຫາກໍຈະໄດ້ຮັບການແກ້ໄຂຢ່າງທັນການ ເຊິ່ງຈະຊ່ວຍຫຼຸດຄ່າໃຊ້ຈ່າຍໃນການແກ້ໄຂບັນຫາ.

# 6 ເວທີສົນທະນາກັບຜູ້ຊ່ຽວຊານ ແລະ ກຸ່ມສົນທະນາ ກ່ຽວກັບ ມາດຕະການຈັດຕັ້ງປະຕິບັດ

ໄດ້ຈັດ ເວທີສົນທະນາ ກັບຜູ້ຊ່ຽວຊານ ເພື່ອສົນທະນາ ກ່ຽວກັບ ສິ່ງທ້າທາຍ ຂອງໂຄງການລົງທຶນໃນຂົງເຂດທີ່ດິນ ໂດຍສະເພາະແມ່ນການລົງທຶນທີ່ມີຄວາມຮັບຜິດຊອບ ກ່ຽວຂ້ອງກັບ 3 ບາດກ້າວຂອງການຈັດຕັ້ງປະຕິບັດໂຄງການລົງທຶນຄື: 1) ກ່ອນການຮັບຮອງ - ກ່ອນການຈັດຕັ້ງປະຕິບັດ, 2) ການພັດທະນາໂຄງການ - ການດໍາເນີນການຜະລິດ/ການຈັດຕັ້ງປະຕິບັດໂຄງການ ແລະ 3) ພາຍຫຼັງສໍາເລັດການຈັດຕັ້ງປະຕິບັດໂຄງການ. ພ້ອມນີ້ກໍໄດ້ຖາມຜູ້ເຂົ້າຮ່ວມການສົນທະນາ ເພື່ອໃຫ້ຄໍາແນະນໍາ ກ່ຽວກັບ ຂົງເຂດທີ່ເປັນບູລິມະສິດຕົ້ນຕໍ ທີ່ຄວນໄດ້ຮັບການຈັດຕັ້ງປະຕິບັດໃນໄລຍະ 5 ປີຕໍ່ໜ້າ.

## 6.1 ເວທີສົນທະນາ ກັບ ຜູ້ຊ່ຽວຊານ ຕາງໜ້າກຸ່ມຜູ້ທີ່ກ່ຽວຂ້ອງ (Panel discussion)

ຈາກພາກລັດ: **ທ່ານ ວິໄລຮັກ ຈັນທະລາດ (DOPF, MAF) ແລະ ທ່ານ ພອນທະວົງ ສິງຫາລາດ (IPD, MPI)**

ຈາກພາກທຸລະກິດ: **ທ່ານ ນາງ ສຸໄພວັນ ທ່ຽງຈັນໄຊ (ບໍລິສັດບົວລະພາ ກະສິກໍາ - ປ່າໄມ້)**

ຈາກພາກ ອົງການຈັດຕັ້ງທາງສັງຄົມ: **ທ່ານ ທອງດໍາ ພົງພິຈິດ (SAEDA/ CSOs).**

ຜູ້ຊ່ຽວຊານໄດ້ ມີຄໍາເຫັນ ກ່ຽວກັບ ສິ່ງທ້າທາຍ ແລະ ຂົງເຂດທີ່ເປັນບູລິມະສິດທີ່ຕິດພັນກັບໄລຍະການຈັດຕັ້ງປະຕິບັດໂຄງການ ການລົງທຶນ ຕາມທັດສະນະ ຂອງພາກສ່ວນຂອງຕົນ. ສິ່ງທ້າທາຍ ແລະ ຂົງເຂດບູລິມະສິດ ສາມາດສັງລວມໄດ້ ດັ່ງລຸ່ມນີ້:

| ຕາງໜ້າພາກສ່ວນ | ສິ່ງທ້າທາຍ | ຂົງເຂດບູລິມະສິດ |
|---|---|---|
| **ພາກລັດ - MPI** | ອົງການຈັດຕັ້ງທີ່ຮັບຜິດຊອບໃນການຕິດຕາມບໍ່ໄດ້ດໍາເນີນການຕິດຕາມຢ່າງເປັນປົກກະຕິ ແລະ ບໍ່ມີປະສິດທິພາບ<br>ກົດໝາຍ, ນິຕິກໍາ ແລະ ກົນໄກຄຸ້ມຄອງບໍ່ທັນມີປະສິດທິພາບ<br>ການສະໜັບສະໜູນອົງການຈັດຕັ້ງຂອງຊາວກະສິກອນ, ການສ້າງຈິດສໍານຶກ ແລະ ຄວາມເຂົ້າໃຈ ກ່ຽວກັບ ນິຕິກໍາແມ່ນຍັງບໍ່ທັນພຽງພໍ | ຮ່ວມມືກັບ DoPF-MAF ເພື່ອຂໍການສະໜັບສະໜູນ ໃນການທົບທວນນິຕິກໍາ ເພື່ອກໍານົດຄວາມຕ້ອງການໃນການສ້າງນິຕິກໍາເພີ່ມເຕີມ<br>ເຮັດວຽກກັບອົງການການເງິນສາກົນ (IFC) (2021-2022) ເພື່ອສ້າງກົນໄກຮັບຟັງຄໍາຮ້ອງທຸກສໍາລັບນັກລົງທຶນ ແລະ ພັດທະນາຖານຂໍ້ມູນສໍາລັບການຕິດຕາມການແກ້ໄຂຄໍາຮ້ອງທຸກ. |
| **ພາກລັດ - MAF** | ຕົວເລກ/ຂໍ້ມູນ ກ່ຽວກັບ ການລົງທຶນດ້ານກະສິກໍາ ແລະ ປ່າໄມ້ ຂະໜາດນ້ອຍ ຍັງມີຈໍາກັດ.<br>ການຈັດສັນດິນໃຫ້ແກ່ການເຊົ່າ ແລະ ສໍາປະທານຍັງພົບຄວາມທ້າທາຍ. ທີ່ຜ່ານມາພື້ນທີ່ດິນບໍ່ທັນໄດ້ຮັບການສໍາຫຼວດຢ່າງລະອຽດ ຫຼື ບໍ່ທັນໄດ້ກໍານົດຢ່າງຈະແຈ້ງ. | ຄວນປັບປຸງກົນໄກ. ຄວນມອບໃຫ້ແກ່ອົງການຈັດຕັ້ງໃດໜຶ່ງຮັບຜິດຊອບສະເພາະ. ລະບົບການບໍລິການຜ່ານປະຕູດຽວ ຈະມີປະສິດທິຜົນສໍາລັບຝ່າຍນັກລົງທຶນ ແລະ ຝ່າຍລັດຖະບານ, ປະຢັດເວລາ, ງົບປະມານ ແລະ ຊັບພະຍາກອນມະນຸດ. |

| | | |
|---|---|---|
| | ການປະສານງານ ແລະ ການແບ່ງຄວາມຮັບຜິດຊອບ ແລະ ອຳນາດໃນການຕັດສິນບັນຫາຂອງພາກສ່ວນຕ່າງໆທັງຂັ້ນສູນກາງ ແລະ ທ້ອງຖິ່ນ ຍັງບໍ່ຈະແຈ້ງ. ມີຊ່ອງວ່າງ ແລະ ການຊໍ້າຊ້ອນ. ສະນັ້ນ ການຈັດຕັ້ງປະຕິບັດຈຶ່ງພົບຄວາມຫຍຸ້ງຍາກ. | ປັບປຸງກົດໝາຍ ແລະ ນິຕິກຳຕ່າງໆໃຫ້ສອດຄ່ອງກັບ ດຳລັດເລກທີ 03, ເຮັດໃຫ້ຂະບວນການອະນຸມັດສັ້ນລົງ.<br>ຄວນມີເຄື່ອງມືໃນການຕິດຕາມທີ່ສາມາດໃຊ້ໄດ້ງ່າຍ ແລະ ຄອບຄຸມສະຖານະການ ແລະ ປະເພດການລົງທຶນທີ່ແຕກຕ່າງກັນໃນ ສປປ ລາວ, ໂດຍສະເພາະສຳລັບຂະແໜງການກະສິກຳ, ເຄື່ອງມືຄວນຈະສາມາດນຳໃຊ້ໄດ້ກັບ ການລົງທຶນໃນທຸກຮູບແບບ ໃນຂົງເຂດກະສິກຳ. ເຄື່ອງມືນັ້ນຄວນສາມາດສ້າງຂໍ້ມູນສຳລັບການວາງແຜນໃນອະນາຄົດໄດ້. |
| **ພາກເອກະຊົນ** | ບໍ່ທັນມີການກຳນົດພື້ນທີ່ ທີ່ສາມາດອະນຸມັດໃຫ້ແກ່ ການເຊົ່າ ແລະ ສຳປະທານ ທີ່ຈະແຈ້ງເທື່ອ. ຂໍ້ມູນ ກ່ຽວກັບ ການນຳໃຊ້ທີ່ດິນ ຍັງບໍ່ສອດຄ່ອງກັບສະພາບຄວາມເປັນຈິງ.<br>ສັນຍາການໃຫ້ເຊົ່າດິນ ບໍ່ທັນມີຄວາມຈະແຈ້ງ. ບາງຄັ້ງຈຶ່ງເກີດມີບັນຫາ ໃນເວລາສົ່ງຄືນທີ່ດິນເຊົ່າໃຫ້ກັບເຈົ້າຂອງເດີມ. | ການກຳນົດ ແລະ ຈັດສັນທີ່ດິນ ຈະຕ້ອງມີຄວາມໂປ່ງໃສກວ່າເກົ່າ.<br>ຕະຫຼາດສຳລັບຜົນຜະລິດດ້ານກະສິກຳ ແລະ ປ່າໄມ້ແມ່ນມີທ່າແຮງສູງ. ຮຽກຮ້ອງໃຫ້ມີຂໍ້ມູນທີ່ຊັດເຈນ ແລະ ພຽງພໍເພື່ອດຶງດູດນັກລົງທຶນ. |
| **ອົງການຈັດຕັ້ງທາງສັງຄົມ** | ງົບປະມານ ແລະ ຊັບພະຍາກອນມະນຸດມີຈຳກັດ ແລະ ຂາດການຕິດຕາມ ແລະ ປະເມີນຜົນການລົງທຶນທີ່ເປັນລະບົບ.<br>ພະນັກງານຂັ້ນທ້ອງຖິ່ນ ແລະ ຊຸມຊົນຍັງມີຄວາມຮູ້ຈຳກັດທາງດ້ານກົດໝາຍ ແລະ ນິຕິກຳ. ການຈັດຕັ້ງປະຕິບັດ ຕິດພັນກັບຫຼາຍຂະແໜງການ ສະນັ້ນ, ຈຶ່ງມີບາງບັນຫາຍັງສັບສົນ ແລະ ບໍ່ກົມກຽວ.<br>ພື້ນທີ່ດິນ ທີ່ຈະສົ່ງເສີມໃຫ້ມີການລົງທຶນດ້ານກະສິກຳ ແລະ ປ່າໄມ້ ຍັງບໍ່ທັນໄດ້ ກຳນົດແຈ້ງ ຢູ່ທ້ອງຖິ່ນ. | ຈັດສັນງົບປະມານ, ຊັບພະຍາກອນມະນຸດ, ການຕິດຕາມ ແລະ ປະເມີນຜົນ, ສ້າງຄວາມກົມກຽວໃນກົນໄກການປະສານງານຢູ່ຂັ້ນສູນກາງ - ທ້ອງຖິ່ນ ແລະ ພາກສ່ວນຕ່າງໆຈາກຄູ່ຮ່ວມພັດທະນາ (ແຜນການຕິດຕາມ - ປະເມີນຜົນ - ລາຍງານ);<br>ສ້າງຂີດຄວາມສາມາດໃຫ້ແກ່ພະນັກງານທ້ອງຖິ່ນ ແລະ ຊຸມຊົນ ລວມເຖິງການເຂົ້າເຖິງຂໍ້ມູນ ໃຫ້ງ່າຍຂຶ້ນ ໂດຍສະເພາະເຂົ້າເຖິງນິຕິກຳ ແລະ ເຄື່ອງມືຕ່າງໆ.<br>ກຳນົດພື້ນທີ່ດິນ ສຳລັບການລົງທຶນດ້ານກະສິກຳຢ່າງຈະແຈ້ງ ເພື່ອຮັບປະກັນ ຄວາມເໝາະສົມກັບທ້ອງຖິ່ນ ລວມມີ ຄວາມເໝາະສົມດ້ານ |

| | |
|---|---|
| | ສິ່ງແວດລ້ອມ ແລະ ການປົກຮັກສາ ຊັບພະຍາກອນທຳມະຊາດ. |

## 6.2 ການຈັດກຸ່ມສົນທະນາ: ຄັດເລືອກຂົງເຂດທີ່ເປັນບູລິມະສິດ ເພື່ອຈັດຕັ້ງປະຕິບັດ ພາຍໃນ 12 ເດືອນຂ້າງໜ້າ

ຫຼັງຈາກສຳເລັດ ເວທີສົນທະນາ ກັບ ຜູ້ຊ່ຽວຊານ ແລ້ວ, ກອງປະຊຸມໄດ້ຈັດກຸ່ມຜູ້ເຂົ້າຮ່ວມອອກເປັນ 8 ກຸ່ມ ຕາມປະເພດຂອງຜູ້ມີສ່ວນກ່ຽວຂ້ອງ. ບັນດາກຸ່ມດັ່ງກ່າວ ລວມມີ: ກ) ກຸ່ມ MPI, ຂ) ກຸ່ມ MAF, ຄ) ກຸ່ມຂອງ ກະຊວງອື່ນໆ, ງ) ກຸ່ມ ພາກເອກະຊົນ, ຈ) ກຸ່ມ CSOs, ສ)ກຸ່ມຄູ່ຮ່ວມພັດທະນາ, ຊ) ກຸ່ມ ສະຖາບັນການສຶກສາ ແລະ ຍ) ກຸ່ມສຳລັບຜູ້ທີ່ເວົ້າພາສາອັງກິດ.

ໂດຍແຕ່ລະກຸ່ມແມ່ນໄດ້ສົນທະນາປຶກສາຫາລື 2 ຫົວຂໍ້ ດັ່ງນີ້:

1. ໃຫ້ກຳນົດເອົາ **3 ຂົງເຂດບູລິມະສິດ ເພື່ອຈະຈັດຕັ້ງປະຕິບັດອີກ 12 ເດືອນຂ້າງໜ້າ** ເຊິ່ງການກຳນົດບູລິມະສິດແມ່ນໃຫ້ອີງໃສ່ສິ່ງທ້າທາຍ ແລະ ບູລິມະສິດຕ່າງໆ ທີ່ນຳສະເໜີຢູ່ເວທີສົນທະນາ (panellists).
2. **ລະບຸແຈ້ງເຖິງບົດບາດຂອງແຕ່ລະພາກສ່ວນ** (ຕາງໜ້າຂອງກຸ່ມສົນທະນາທີ່ໄດ້ກຳນົດຂຶ້ນ) **ໃນການຈັດຕັ້ງປະຕິບັດໜ້າວຽກທີ່ເປັນບູລິມະສິດ** ເພື່ອສ້າງຄວາມເຂັ້ມແຂງວຽກງານ RAI ໃນອີກ 12 ເດືອນຂ້າງໜ້າ.

ກອງປະຊຸມໄດ້ນຳໃຊ້ Jamboard ເຂົ້າຊ່ວຍໃນການອຳນວຍຄວາມສະດວກໃນການສົນທະນາ ແລະ ບັນທຶກຜົນຂອງການສົນທະນາ ຂອງແຕ່ລະກຸ່ມ (ເບິ່ງເອກະສານຊ້ອນທ້າຍ III).

ພາຍຫຼັງສຳເລັດການສົນທະນາໃນກຸ່ມ, ຕາງໜ້າກຸ່ມໄດ້ ລາຍງານຜົນຂອງການສົນທະນາ ໃຫ້ແກ່ຜູ້ເຂົ້າຮ່ວມທັງໝົດ. ຜົນໄດ້ຮັບເຫັນວ່າ ຂົງເຂດບູລິມະສິດ ຈຳນວນໜຶ່ງ ທີ່ໄດ້ຍົກຂຶ້ນນຳສະເໜີໂດຍກຸ່ມຕ່າງໆ ເຫັນວ່າມີບາງບັນຫາ ແມ່ນຊ້ຳກັນ ຫຼື ມີຄວາມຄ້າຍຄືກັນ, ເຊິ່ງສາມາດສັງລວມໄດ້ ຂົງເຂດບູລິມະສິດຈຳນວນໜຶ່ງ ດັ່ງຕໍ່ໄປນີ້ (ການລຽງລຳດັບຫົວຂໍ້ນີ້ບໍ່ໄດ້ອີງໃສ່ລຳດັບຄວາມສຳຄັນ ຂອງບູລິມະສິດ):

1. **ກອບດ້ານນິຕິກຳ ແລະ ການບັງຄັບໃຊ້**:
   - ທົບທວນ, ປັບປຸງ ແລະ ເຜີຍແຜ່ ກົດໝາຍ ແລະ ນິຕິກຳທີ່ມີແລ້ວ ໃຫ້ກຸ່ມເປົ້າໝາຍໃຫ້ກວ້າງຂວາງກວ່າເກົ່າ.
   - ມີກົດໝາຍ ແລະ ນິຕິກຳທີ່ຕິດພັນກັບການລົງທຶນໃນຂົງເຂດທີ່ດິນ ແລະ ການລົງທຶນທີ່ມີຄວາມຮັບຜິດຊອບ ຢູ່ຫຼາຍສະບັບແລ້ວ ສະນັ້ນ ຄວນຍົກສູງໃນການບັງຄັບໃຊ້ໃຫ້ກົດໝາຍ - ຫຼີກລຽງການສ້າງກົດໝາຍໃໝ່.
   - ຄວນມີນະໂຍບາຍ ແລະ ສິ່ງຈູງໃຈ ໃຫ້ແກ່ການຜະລິດ ແລະ ປຸງແຕ່ງ ຢູ່ພາຍໃນ ເພື່ອຫຼີກລຽງການສົ່ງອອກວັດຖຸດິບ.
2. **ລະບົບຖານຂໍ້ມູນ ແລະ ການແລກປ່ຽນຂໍ້ມູນ**: ສ້າງລະບົບຖານຂໍ້ມູນ ກ່ຽວກັບ ພື້ນທີ່ ທີ່ມີການສົ່ງເສີມການລົງທຶນ ລວມທັງຄວາມເໝາະສົມຂອງດິນ ແລະ ພື້ນທີ່ດິນເປົ່າຫວ່າງ ສຳລັບການລົງທຶນໃນອະນາຄົດ ແລະ ຖານຂໍ້ມູນການຂຶ້ນບັນບັນຊີໂຄງການລົງທຶນ ທີ່ໄດ້ອະນຸມັດຜ່ານມາ. ຖານຂໍ້ມູນເຫຼົ່ານີ້ ຄວນມີ ແລະ ເຮັດໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງທັງໝົດເຂົ້າເຖິງໄດ້.
3. **ເວທີແລກປ່ຽນ:** ຈັດເວທີແລກປ່ຽນ ເພື່ອແລກປ່ຽນ ລະຫວ່າງ ຜູ້ຕັດສິນບັນຫາ ແລະ ນັກລົງທຶນ ເພື່ອທົບທວນນະໂຍບາຍທີ່ມີແລ້ວ ແລະ ຂະບວນການຕ່າງໆທີ່ຕິດພັນກັບການລົງທຶນໃນຂົງເຂດທີ່ດິນ. ກອງປະຊຸມແລກປ່ຽນຄວນເປັນການສ້າງເວທີໃຫ້ແກ່ພາກເອກະຊົນໄດ້ສະເໜີຄິດເຫັນໃນການປັບປຸງນະໂຍບາຍ ແລະ ກົດໝາຍຕ່າງໆ.

4. **ການສ້າງຄວາມຮັບຮູ້ ກ່ຽວກັບ ຫຼັກການ RAI ຄວນປັບໃຫ້ແທດເໝາະກັບເງື່ອນໄຂຂອງທ້ອງຖິ່ນ:** ສ້າງຈິດສຳນຶກ ກ່ຽວກັບ ຫຼັກການ RAI ໃຫ້ແກ່ກຸ່ມເປົ້າໝາຍ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ. ປັບຫຼັກການສາກົນ ແລະ ເຄື່ອງມືຕ່າງໆ ໃຫ້ແທດ ເໝາະກັບສະພາບເງື່ອນໄຂຂອງທ້ອງຖິ່ນ ພ້ອມທັງຝຶກອົບຮົມໃຫ້ແກ່ຜູ້ທີ່ມີສ່ວນກ່ຽວຂ້ອງ ໂດຍສະເພາະແມ່ນຢູ່ຂັ້ນທ້ອງຖິ່ນ.
5. **ການສ້າງຂີດຄວາມສາມາດໃຫ້ແກ່ທ້ອງຖິ່ນ:** ການສ້າງຂີດຄວາມສາມາດໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ ຄວນອີງໃສ່ຫຼັກຖານ ແລະ ຄວນພິຈາລະນາ ເຖິງເງື່ອນໄຂ ແລະ ສະພາບແວດລ້ອມ ສະເພາະ ຂອງທ້ອງຖິ່ນ, ໝາຍຄວາມ ວ່າ ຄວນອີງໃສ່ຄວາມຕ້ອງການເປັນຕົວຈິງ. ສໍາລັບການສ້າງຂີດຄວາມສາມາດ, ຄວນນໍາໃຊ້ເອກະສານ/ເຄື່ອງມືທີ່ມີຢູ່ແລ້ວ ແທນທີ່ຈະສ້າງອັນໃໝ່ ແລະ ສິ່ງສຳຄັນ ແມ່ນຈະຕ້ອງຮັບປະກັນວ່າ ເອກະສານ ແລະ ເຄື່ອງມືທີ່ນໍາມາຝຶກນັ້ນບໍ່ສະຫຼັບສັບ ຊ້ອນໃນການນໍາໃຊ້ ແລະ ຄວນເປັນພາສາລາວ.
6. **ການແກ້ໄຂ ແລະ ຫຼຸດຜ່ອນຜົນກະທົບດ້ານລົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ:**
    - ແກ້ໄຂບັນຫາຄວາມປອດໄພຂອງແຮງງານ, ຜົນກະທົບດ້ານສິ່ງແວດລ້ອມ ແລະ ການຟື້ນຟູຊີວິດການເປັນຢູ່ຂອງ ຊຸມຊົນທີ່ໄດ້ຮັບຜົນກະທົບ ອີງຕາມລະບຽບກົດໝາຍທີ່ມີຢູ່ແລ້ວ.
    - ປັບປຸງການຄຸ້ມຄອງການນໍາໃຊ້ສານເຄມີກະສິກໍາ ໃນການປູກພືດ.
7. **ສ້າງກົນໄກລວມສູນສໍາລັບອົງການຈັດຕັ້ງຂອງລັດ ແລະ ງົບປະມານ ຂອງຫຼາຍຂະແໜງການ:**
    - ກໍານົດ ພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຂະແໜງການ ຢູ່ທຸກຂັ້ນໃຫ້ຈະແຈ້ງ.
    - ສ້າງກົນໄກການປະສານງານທີ່ເໝາະສົມ ເພື່ອຫຼຸດຄ່າໃຊ້ຈ່າຍໃນການປະສານງານ.
    - ລະດົມທຶນ ແລະ ຈັດສັນທຶນ ໃນສັດສ່ວນທີ່ເໝາະສົມໃຫ້ແກ່ບັນດາຂະແໜງການທີ່ກ່ຽວຂ້ອງ ຢູ່ໃນແຕ່ລະຂັ້ນ.
8. **ການຕິດຕາມ ແລະ ປະເມີນຜົນ:**
    - ສ້າງກົນໄກຕິດຕາມ ແລະ ປະເມີນຜົນການລົງທຶນຢ່າງເປັນລະບົບ ລວມທັງການຕິດຕາມຜົນກະທົບດ້ານ ສິ່ງແວດລ້ອມ.
    - ສ້າງກົນໄກແກ້ໄຂຄໍາຮ້ອງທຸກທີ່ເໝາະສົມ ລວມມີລະບົບຖານຂໍ້ມູນ. ອົງການຈັດຕັ້ງຂອງລັດຄວນເຂົ້າມາມີບົດ ບາດສໍາຄັນໃນການແກ້ໄຂຂໍ້ຂັດແຍ່ງ.

ສໍາລັບລາຍລະອຽດຜົນຮັບຈາກກຸ່ມສົນທະນາ ຂໍໃຫ້ເບິ່ງໃນເອກະສານຊ້ອນທ້າຍ III.

# 7 ຄໍາເຫັນກ່າວປິດກອງປະຊຸມ

**ທ່ານ ແອນດູ ນາເດືອ (Andrew Nado), ພະນັກງານອາວຸໂສດ້ານການສ້າງຂີດຄວາມສາມາດ, ອົງການ FAO** ໄດ້ໃຫ້ຮູ້ວ່າ ອົງ ປະກອບທີ່ສໍາຄັນໃນການສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ RAI ແມ່ນ ການຮ່ວມມືຂອງບັນດາຜູ້ທີ່ມີສ່ວນກ່ຽວຂ້ອງທັງ ໝົດ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ. ທ່ານ ແອນດູ ນາໂດ ໄດ້ເນັ້ນຕື່ມວ່າ ການມີສ່ວນຮ່ວມ ແລະ ຂີດຄວາມອາດສາມາດຂອງ ພະນັກງານ ທຸກຂັ້ນ ຈາກຂັ້ນສູນກາງ ຈົນເຖິງຂັ້ນທ້ອງຖິ່ນ ແມ່ນມີຄວາມຈໍາເປັນຫຼາຍ. ຕົວຢ່າງ: ແຜນງານລິເລີ່ມ ທີ່ໄດ້ຈັດຕັ້ງ ປະຕິບັດ ໂດຍ FAO ໂດຍໄດ້ຈັດກອງປະຊຸມປະເມີນຂີດຄວາມສາມາດ ເຊິ່ງກໍານົດຊ່ອງວ່າງດ້ານຂີດຄວາມສາມາດຂອງພະນັກງານ ຢູ່ໃນແຕ່ລະຂັ້ນ. ໂດຍອີງໃສ່ຜົນໄດ້ຮັບນີ້ ທາງ FAO ໄດ້ພັດທະນາແຜນງານ ການຮຽນຮູ້ ໃຫ້ກັບພະນັກງານຂອງລັດ ຢູ່ແຕ່ລະຂັ້ນ ໂດຍສະເພາະແມ່ນພະນັກງານລັດຂັ້ນທ້ອງຖິ່ນ ຂອງຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ຂະແໜງກະສິກໍາ ແລະ ປ່າໄມ້, ຂະແໜງແຜນ ການ ແລະ ການລົງທຶນ, ຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ອື່ນໆ. ໂຄງການຂອງ FAO ແມ່ນໃຫ້ການ ສະໜັບສະໜູນການສ້າງຈິດສໍານຶກ ແລະ ການຈັດຕັ້ງປະຕິບັດຫຼັກການອາຊຽນ RAI ໃນລະດັບພາກພື້ນ ແລະ ໃນ ສປປ ລາວ. ທ່ານ ແອນດູ ນາໂດ ໄດ້ຮຽກຮ້ອງໃຫ້ ສປປ ລາວ ສະໜອງຂໍ້ມູນ ເພື່ອແລກປ່ຽນປະສົບການ ແລະ ການຈັດຕັ້ງປະຕິບັດທີ່ດີ ທີ່ຕິດພັນກັບ ການສ້າງກອບນະໂຍບາຍ ແລະ ນິຕິກໍາ ກັບບັນດາປະເທດສະມາຊິກອາຊຽນ ຢູ່ໃນກອງປະຊຸມລະດັບພາກພື້ນທີ່ຈະໄດ້ຈັດຂຶ້ນໃນປີ

NIRAS
IP CONSULT

ໜ້າ. ທ່ານ ແອນດູ ນາໂດ ກ່າວຂອບໃຈໃນການມີສ່ວນຮ່ວມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ພິເສດແມ່ນຈາກພາກເອກະຊົນ ເຊິ່ງເຊື່ອວ່າ ຈະໄດ້ສືບຕໍ່ໃຫ້ການຮ່ວມມືທີ່ດີໃນອະນາຄົດ.

**ທ່ານ ພອນທະວົງ ສີງຫາລາດ, ຫົວໜ້າພະແນກຮ່ວມມື, ຕາງໜ້າ MPI ແລະ MAF** ກ່າວຂອບໃຈຜູ້ເຂົ້າຮ່ວມທຸກທ່ານຈາກພາກ ລັດ , ພາກເອກະຊົນ, ອົງການຈັດຕັ້ງສາກົນ, CSOs ທີ່ໄດ້ປະກອບສ່ວນຢ່າງຫ້າວຫັນໃນກອງປະຊຸມຄັ້ງນີ້ ແລະ ທັງໄດ້ໃຫ້ການຮ່ວມມື ເປັນຢ່າງດີໃນໄລຍະທີ່ຜ່ານມາ. ທ່ານ ພອນທະວົງ ໄດ້ກ່າວເນັ້ນຕື່ມອີກວ່າ ການຮ່ວມມືລັກສະນະນີ້ຄວນໄດ້ຮັບການສືບຕໍ່. ກອງປະຊຸມຫຼາຍຝ່າຍ ປະຈໍາປີ 2021 ນີ້ ກາຍເປັນຂີດໝາຍສໍາຄັນຂອງການຈັດຕັ້ງປະຕິບັດ RAI ແລະ ການປະສານງານຂອງຜູ້ທີ່ມີສ່ວນກ່ຽວຂ້ອງ. ທ່ານ ພອນທະວົງ ກ່າວຂອບໃຈສໍາລັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາ ພິເສດ ແມ່ນອົງການ GIZ, FAO ແລະ NIRAS; ຂອບໃຈຢ່າງຈິງໃຈ ຕາງໜ້າຂອງພາກລັດທັງຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ແລະ ຕົວແທນຈາກພາກເອກະຊົນທີ່ມາແລກປ່ຽນປະສົບການທີ່ມີຄຸນຄ່າ ທີ່ໄດ້ຈາກການປະຕິບັດຕົວຈິງ. ການແລກປ່ຽນ ແລະ ການຮ່ວມມືນີ້ ຄວນສືບຕໍ່ ເພື່ອໃຫ້ ສາມາດແກ້ໄຂສິ່ງທ້າທາຍ ແລະ ມີຜົນໄດ້ຮັບທີ່ດີກວ່າເກົ່າໃນອະນາຄົດ.

# 8 ສະຫຼຸບ ແລະ ບົດຮຽນທີ່ ທາງຄະນະຈັດກອງປະຊຸມ ຖອດຖອນໄດ້

ຄວາມເຂົ້າໃຈ ແລະ ແນວຄວາມຄິດ ຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ກ່ຽວກັບ ການລົງທຶນທີ່ມີຄວາມຮັບຜິດຊອບ ວ່າໝາຍເຖິງຫຍັງ ແລະ ຈະສົ່ງເສີມແນວໃດ ແມ່ນມີຄວາມແຕກຕ່າງກັນ ແລະ ຄວາມຮັບຮູ້ກ່ຽວກັບ RAI ຢູ່ສປປ ລາວ ຍັງຢູ່ລະດັບຕໍ່າ. ຜົນຂອງການສໍາຫຼວດຜູ້ກ່ຽວຂ້ອງເກືອບ 400 ທ່ານ ໄດ້ໃຫ້ຮູ້ວ່າ ໃນຊຸມປີຜ່ານມານີ້ ສປປ ລາວ ສາມາດດຶງດູດການລົງທຶນທີ່ມີຄວາມຮັບຜິດຊອບໄດ້ເພີ່ມຂຶ້ນ ແຕ່ເຫັນວ່າ ຍັງຄົງມີສິ່ງທ້າທາຍຫຼາຍ ສໍາລັບການຈັດຕັ້ງປະຕິບັດ RAI. ຜູ້ເຂົ້າຮ່ວມການສາຫຼວດສ່ວນໃຫຍ່ ລະບຸວ່າ ການນໍາໃຊ້ສານເຄມີກະສິກໍາ ທີ່ບໍ່ຖືກຕ້ອງ ແມ່ນໜຶ່ງໃນບັນຫາທີ່ເຄັ່ງຮ້ອນທີ່ສຸດ ທີ່ຂະແໜງ ກະສິກໍາ ຂອງສປປ ລາວ ກໍາລັງປະເຊີນຢູ່ໃນປັດຈຸບັນ. ບັນຫາອື່ນໆ ທີ່ກ່ຽວຂ້ອງກັບ RAI ທີ່ຜູ້ໃຫ້ຂໍ້ມູນ ເຫັນວ່າເປັນບັນຫາ ລວມມີ ບັນດາກົນໄກຂອງລັດ ເຊັ່ນ: ການຕິດຕາມກວດກາ ໂຄງການລົງທຶນ ແລະ ການບັງຄັບໃຊ້ບັນດານິຕິກໍາທີ່ມີຢູ່ ທີ່ມີປະສິດທິຜົນ.

ການສົນທະນາທີ່ຟົດຟື້ນ ຕໍ່ກັບ ກໍລະນີສຶກສາ ຈາກແຂວງ ຫຼວງພະບາງ ກ່ຽວກັບ ບັນຫາຄວາມຮັບຜິດຊອບ ຂອງນັກລົງທຶນ ໃນການຟື້ນຟູທີ່ດິນທີ່ຊຸດໂຊມ ພາຍຫຼັງການປູກໝາກກ້ວຍ ຊຶ່ງສະທ້ອນໃຫ້ເຫັນວ່າ ມັນຍັງແມ່ນບັນຫາທີ່ໜ້າກັງວົນຫຼາຍ. ນິຕິກໍາໃໝ່ (ເຊັ່ນ: ຄໍາແນະນໍາ ຂອງ MPI ສະບັບເລກທີ 0457) ໄດ້ຕອບສະໜອງ ກອບນິຕິກໍາ ສໍາລັບການແກ້ໄຂບັນຫາ ຄວາມຮັບຜິດຊອບ ຂອງນັກລົງທຶນດັ່ງກ່າວ ແຕ່ມັນຮຽກຮ້ອງໃຫ້ມີ ຄວາມພະຍາຍາມຫຼາຍກວ່ານີ້ ໃນການເຜີຍແຜ່ ແລະ ບັງຄັບໃຊ້ຢ່າງມີຄວາມເປັນເອກະພາບ. ການສ້າງນິຕິກໍາໃໝ່ ດັ່ງກ່າວ ແມ່ນຂະແໜງແຜນການ ແລະ ການລົງທຶນ ເປັນເຈົ້າການ, ແຕ່ການເຜີຍແຜ່ຢູ່ຂັ້ນທ້ອງຖິ່ນ ແມ່ນຈໍາເປັນຕ້ອງມີຄວາມພະຍາຍາມຮ່ວມກັນ ລະຫວ່າງ ຂະແໜງກະສິກໍາ ແລະ ປ່າໄມ້ ລວມທັງ ຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນໆ - ການປະສານງານ ລະຫວ່າງ ຂັ້ນສູນກາງ, ແຂວງ ແລະ ທ້ອງຖິ່ນ ແມ່ນມີຄວາມສໍາຄັນ.

ການປະຕິບັດທີ່ດີ ຈໍານວນໜຶ່ງ ກ່ຽວກັບ RAI ແມ່ນມີຢູ່ສປປ ລາວ ແລ້ວ ດັ່ງກໍລະນີ ຂອງບໍລິສັດບົວລະພາ ກະສິກໍາ-ປ່າໄມ້ ຈໍາກັດ ແລະ ບໍລິສັດ ແມ່ຂອງປູກໄມ້ ຈໍາກັດ ຊຶ່ງສອງກໍລະນີດັ່ງກ່າວ ຈະເປັນບົດຮຽນທີ່ດີ ສໍາລັບການຮຽນຮູ້ເຊິ່ງກັນ. ບົດຮຽນທີ່ສໍາຄັນ ຈາກບໍລິສັດເຫຼົ່ານີ້ ແມ່ນຮຽກຮ້ອງໃຫ້ມີ ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການລົງທຶນທີ່ມີຄວາມຮັບຜິດຊອບ ເພື່ອເຮັດໃຫ້ການປະຕິບັດທີ່ດີດັ່ງກ່າວ ກາຍເປັນມາດຖານ ຂອງການລົງທຶນ. ໃນຂະນະດຽວກັນນັ້ນ, ບໍລິສັດເຫຼົ່ານີ້ ຍັງໄດ້ຊີ້ໃຫ້ເຫັນວ່າ ມັນມີຄວາມທ້າທາຍຫຼາຍ ຊຶ່ງເປັນອຸປະສັກໃຫ້ແກ່ ການລົງທຶນ ໂດຍສະເພາະແມ່ນ ການລົງທຶນທີ່ມີຄວາມຮັບຜິດຊອບ ລວມທັງ ການຂາດຄວາມໂປ່ງໃສ ແລະ ຂໍ້ມູນທີ່ຊັດເຈນ ກ່ຽວກັບ ທີ່ດິນທີ່ເໝາະສົມ ແລະ ສາມາດອະນຸມັດໃຫ້ແກ່ການລົງທຶນ.

ນອກຈາກນັ້ນ ການຂະຫຍາຍອຽກງານ ການຕິດຕາມໂຄງການລົງທຶນ ເພື່ອເຮັດໃຫ້ ແຜນພັດທະນາ ໄປຄຽງຄູ່ກັບ ການປ້ອງກັນຜົນກະທົບ ແມ່ນຈະເປັນການປະກອບສ່ວນເຂົ້າໃນ ການຄຸ້ມຄອງບໍລິຫານ ການລົງທຶນທີ່ດີກວ່າເກົ່າ. ການສະໜັບສະໜູນເຄື່ອງມື IPM ຂອງອົງການ GIZ ແມ່ນຄາດວ່າຈະໄດ້ຮັບການຂະຫຍາຍໃຫ້ມີການນຳໃຊ້ຢ່າງກວ້າງຂວາງ.

ໂດຍຮັບຮູ້ເຖິງຈຸດພິເສດ ຂອງການລົງທຶນໃນຂົງເຂດ ກະສິກຳ ແລະ ປ່າໄມ້ ແມ່ນມີຫຼາຍຂະແໜງການ ທີ່ມີສ່ວນກ່ຽວຂ້ອງ, ສະນັ້ນ, ການສົ່ງເສີມ ຫຼັກການ ກ່ຽວກັບ RAI ຈະຕ້ອງໄດ້ດຳເນີນບົນພື້ນຖານ ຄວາມພະຍາຍາມ ຂອງຫຼາຍຂະແໜງການ. ການຮຽນຮູ້ຮ່ວມກັນຂອງຜູ້ມີສ່ວນກ່ຽວຂ້ອງ ລວມທັງ ຜູ້ສ້າງນະໂຍບາຍ, ນັກວິທະຍາສາດຈາກຫຼາຍສາຂາ, ພາກເອກະຊົນ ແລະ ຜູ້ຈັດຕັ້ງປະຕິບັດຕົວຈິງ ຄວນໄດ້ຮັບການສືບຕໍ່ ເພື່ອກຳນົດ ແລະ ສ້າງຄວາມເຂົ້າໃຈກ່ຽວກັບສິ່ງທ້າທາຍ ຈາກນັ້ນ ກໍເຫັນດີເປັນເອກະພາບຮ່ວມກັນກ່ຽວກັບ ທາງອອກ ແລະ ສ້າງຍຸດທະສາດຮ່ວມກັນ ວ່າຈະກ້າວໄປເຖິງເປົ້າໝາຍດັ່ງກ່າວຄືແນວໃດ.

ຂ້າງລຸ່ມນີ້ແມ່ນ ບັນດາຂໍ້ສະເໜີແນະ ຂອງຄະນະຈັດກອງປະຊຸມ ຕໍ່ກັບ ກອງປະຊຸມຫຼາຍຝ່າຍກ່ຽວກັບ RAI ປະຈຳປີ 2021 ທີ່ຄວນຈະນຳໄປພິຈາລະນາໃນການວາງແຜນ ກອງປະຊຸມປຶກສາຫາລືຫຼາຍຝ່າຍ ກ່ຽວກັບ RAI ໃນຕໍ່ໜ້າ:

- ຜົນຂອງການສຳຫຼວດທາງອອນລາຍ ໄດ້ສະໜອງຜົນໄດ້ຮັບທີ່ມີປະໂຫຍດຫຼາຍ ໂດຍສະເພາະແມ່ນ ບັນດາຫົວຂໍ້ທີ່ຜູ້ທີ່ມີສ່ວນກ່ຽວຂ້ອງໃຫ້ຄວາມສົນໃຈ ແລະ ບັນຫາຕົ້ນຕໍທີ່ຕິດພັນກັບການຈັດຕັ້ງປະຕິບັດ RAI. ກອງປະຊຸມປຶກສາຫາລືຫຼາຍຝ່າຍ ຄັ້ງຕໍ່ໄປຄວນ ສືບຕໍ່ຕິດຕາມ ທັດສະນະ ຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ໂດຍຜ່ານວິທີການສຳຫຼວດ ແລະ ຄວນອີງໃສ່ຜົນການສຳຫຼວດໃນປີນີ້ ເພື່ອອອກແບບ ວາລະ ຂອງກອງປະຊຸມຫຼາຍຝ່າຍຄັ້ງຕໍ່ໄປ.
- ເວລາສຳລັບການສົນທະນາ ລະຫວ່າງ ຜູ້ເຂົ້າຮ່ວມ ແມ່ນມີຈຳກັດຫຼາຍ. ສະນັ້ນ ຄວນເພີ່ມເວລາໃຫ້ແກ່ການສົນທະນາ ໃນແຕ່ລະວາລະຕື່ມອີກ. ພ້ອມດຽວກັນນັ້ນ, ກໍຄວນເພີ່ມເວລາໜ້ອຍໜຶ່ງ ເພື່ອສັງລວມຜົນຂອງການປຶກສາຫາລືໃນຕອນທ້າຍຂອງແຕ່ວາລະ.
- ຄວນມີເວລາພຽງພໍໃຫ້ແກ່ການສົນທະນາລວມ ກ່ຽວກັບ ຜົນໄດ້ຮັບຈາກກຸ່ມສົນທະນາ ເພື່ອໃຫ້ມີຄວາມເປັນເອກະພາບຕໍ່ກັບແຜນການເຄື່ອນໄຫວ, ບາດກ້າວຕໍ່ໄປ ແລະ ອື່ນໆ.
- ມີພຽງແຕ່ 2 ບໍລິສັດທີ່ເຂົ້າຮ່ວມ ກອງປະຊຸມປຶກສາຫາລືຫຼາຍຝ່າຍ ປີ 2021 ຊຶ່ງທັງ 2 ບໍລິສັດ ແມ່ນເປັນທີ່ຮູ້ຈັກກັນດີແລ້ວວ່າ ມີການນຳໃຊ້ຫຼັກການ RAI ເຂົ້າໃນການດຳເນີນທຸລະກິດແລ້ວ. ສະນັ້ນ, ຈຶ່ງເຫັນວ່າ ຈະຕ້ອງໄດ້ໃຫ້ມີຕົວແທນພາກເອກະຊົນເຂົ້າຮ່ວມຫຼາຍຂຶ້ນໃນກອງປະຊຸມປີຕໍ່ໄປ ແລະ ຂໍແນະນຳຢ່າງໜັກແໜ້ນວ່າ ໃຫ້ມີຕົວແທນຂອງຊຸມຊົນເຂົ້າຮ່ວມໃນກອງປະຊຸມຄັ້ງຕໍ່ໄປ.
- ກໍລະນີສຶກສາ ທີ່ໄດ້ຄັດເລືອກ ແມ່ນດີຫຼາຍ ຊຶ່ງມັນເປັນພື້ນຖານໃຫ້ແກ່ການສົນທະນາດ້ານວິຊາການ ຊຶ່ງມີຄວາມສ້າງສັນ ແລະ ເປັນທີ່ສົນໃຈຂອງຜູ້ເຂົ້າຮ່ວມ. ຈຶ່ງສະເໜີວ່າ ກອງປະຊຸມປຶກສາຫາລືຫຼາຍຝ່າຍ ຄັ້ງຕໍ່ໄປ ຄວນສ້າງບົນພື້ນຖານຄວາມສຳເລັດນີ້ ໂດຍການກຳນົດບັນດາກໍລະນີສຶກສາແຕ່ຕົ້ນປີ ມີການວິເຄາະ ແລະ ຖອດບົດຮຽນການກໍລະນີດັ່ງກ່າວ.
- ໃນຂະນະທີ່ ສອງຈຸດປະສົງທີທຳອິດຂອງ ກອງປະຊຸມປຶກສາຫາລືຫຼາຍຝ່າຍ ປະຈຳປີ 2021 ແມ່ນບັນລຸຜົນໄດ້ເປັນຢ່າງດີ ແຕ່ວ່າ ຈຸດປະສົງທີ 3 (ການຮັບຮູ້ບົດບາດຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ການກຳນົດທິດທາງເພື່ອເສີມຂະຫຍາຍການຮ່ວມມື) ແມ່ນຍາກທີ່ຈະບອກວ່າ ສາມາດບັນລຸໄດ້ ຫຼື ບໍ່. ຊຶ່ງຄວາມຄາດຫວັງແມ່ນ ພາຍຫຼັງກອງປະຊຸມແລ້ວ ຜູ້ເຂົ້າຮ່ວມ ມີສິ່ງທີ່ເປັນຄຳໝັ້ນສັນຍາ ຕໍ່ກັບ ມາດຕະການໃນການຈັດຕັ້ງປະຕິບັດ ໂດຍການເອກະພາບກັນຢູ່ໃນກຸ່ມສົນທະນາ. ໃນຕໍ່ໜ້າ ຈຶ່ງແນະນຳວ່າ ຄວນເພີ່ມໄລຍະເວລາ ຂອງກອງປະຊຸມ ໂດຍອາດມີການຈັດປະຊຸມແຍກສະເພາະກຸ່ມຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ເພື່ອປຶກສາ ກ່ຽວກັບ ສິ່ງທ້າທາຍ ແລະ ກຳນົດທິດທາງໃນຕໍ່ໜ້າ.
- ສະເໜີໃຫ້ມີການເພີ່ມເວລາອີກຢ່າງໜ້ອຍເຄິ່ງມື້ ເພື່ອປຶກສາ ກ່ຽວກັບ ບົດບາດ ແລະ ຄວາມຮັບຜິດຊອບ ແລະ ການເສີມຂະຫຍາຍການປະສານສົມທົບ ລະຫວ່າງ ບັນດາຜູ້ທີ່ມີສ່ວນທີ່ກ່ຽວຂ້ອງ.

# ເອກະສານຊ້ອນທ້າຍທີ I

## ລາຍຊື່ຜູ້ເຂົ້າຮ່ວມ (ຜູ້ເຂົ້າຮ່ວມ ແລະ ແຂກຮັບເຊີນ)

ລາຍຊື່ຜູ້ເຂົ້າຮ່ວມ I: ລາຍຊື່ຜູ້ເຂົ້າຮ່ວມ (ຜູ້ເຂົ້າຮ່ວມ ແລະ ແຂກຮັບເຊີນ)

| ລ/ດ | ຊື່ ແລະ ນາມສະກຸນ | ອົງການຈັດຕັ້ງ | ທີ່ຢູ່ຕິດຕໍ່ |
|---|---|---|---|
| 1. | ທ່ານ ອຸດຕະແກ້ວ ແກ້ວດວງສີນ | ຫົວໜ້າກົມ, ກະຊວງແຜນການ ແລະ ການລົງທຶນ | |
| 2. | ທ່ານ ຊູຊາດ ໄຊຍະກຸມມານ | ຫົວໜ້າກົມ, DoPF, MAF | |
| 3. | ດຣ. ພອນໄຊ ວິໄລສັກ | ຮອງຫົວໜ້າກົມ, IPD, MPI | |
| 4. | ທ່ານ ພອນທະວົງ ສີງຫາລາດ | IPD, MPI | |
| 5. | ທ່ານ ນ. ພູວອນ ທຳມະວົງ | | |
| 6. | ດຣ. ນິດຖາ ບຸບຜາ | ສູນຝຶກອົບຮົມ, ກຜລ | 020 29801393 |
| 7. | ທ່ານ ສຸພະລັກ ທຳມະສອນ | DoPF, MAF | |
| 8. | ທ່ານ ວິໄລຣັກ ຈັນທະລາດ | DoPF, MAF | |
| 9. | ທ່ານ ພູສິດ ບາຄຳ | DoPF, MAF | |
| 10. | ທ່ານ ຄຳຟົ້ນ ຈັນທະວົງ | | |
| 11. | ທ່ານ ນ. ມະນີສອນ | | |
| 12. | ທ່ານ ນ. ຈິດດາ ມີໄລວົງ | NIRAS-IP Consult | |
| 13. | ທ່ານ ນ. ດາຣາສະຫວັດ ພຸຍສີຣີ (ຕົ່ງ) | NIRAS-IP Consult | |
| 14. | ທ່ານ ນ. ບົວສະຫວັນ ຄັນທະພັດ | NIRAS-IP Consult | |
| 15. | ທ່ານ ວົງ ນັນທະວົງ | NIRAS-IP Consult | |
| 16. | ທ່ານ ແອນດຣິວ ບາແລັດ | Helvetas - LURAS | 020 59560333 |
| 17. | ທິບ | n/a | n/a |
| 18. | ນໍຣາ ເທີເຟລ | GIZ Laos | 020 55393408 |
| 19. | ໂຣບິນ ໂອ ເດີ ບີກ | RECOFTC | (+66) 80 191 0062 |
| 20. | ກອງແກ້ວ ສີວິໄລ | Freelance | 020 55552719 |
| 21. | ອູ້ອີ້ ກິດຕິຄຸນ | Canadian Executive Service Organization | 020 56301308 |
| 22. | ເອວາ ເປຣດິເຈີ | GIZ Laos | |
| 23. | ລຸຍຊາ ເຈນເຊັນ | FAO | |
| 24. | ຄຳຫຼ້າ ນັນທະວົງ | Land Program/GIZ Laos | 020 225 578 79 |
| 25. | ຂັນທອນ ຜາເມືອງ | Environment Conservation and Community Development Association | 020 55527559 |
| 26. | ມາຣິຕາ ຊິເນໂຣສ | ໂຄງການຄຸ້ມຄອງທີ່ດິນ ປະຈຳພາກພື້ນແມ່ນ້ຳຂອງ (Mekong Regional Land Governance (MRLG) Project) | 020 52339550 |
| 27. | ເຣເລນນາ ອາເລັກຊັນ ສະເວັນຊັນ | ບໍລິສັດແມ່ຂອງປູກໄມ້ (Mekong Timber Plantations (MTP)) | 020 97064888 |

| ລ/ດ | ຊື່ ແລະ ນາມສະກຸນ | ອົງການຈັດຕັ້ງ | ທີ່ຢູ່ຕິດຕໍ່ |
|---|---|---|---|
| 28. | ມະໂນລີ ສີສະຫວັນ | WCS | 020 977777405 |
| 29. | ແອນໂທນີ ໂຊບາ | GMS Research Group | +66892069377 |
| 30. | ເຄດ ຣິກເກີຊ | Land Equity International | +61421474427 |
| 31. | ອາຊຸ້ນຕາ ເທສຕາ | EU Delegation | 020 54721496 |
| 32. | ຣິຊາດ ແຮັກແມນ | CDE | 020 22432252 |
| 33. | ສອນສຸລີວັນ ວົງສຸລິນ | | 020 22132686 |
| 34. | ວິຊາກອນ ທຳມະວົງ | GIZ Laos | 020 58883233 |
| 35. | ຄຳພູວຽງ ເອກະພັນ | GIZ Laos | 020 98887379 |
| 36. | ເດແນລ ເຮເວີດ | ມະຫາວິທະຍາໄລ ຊຽງໃໝ່ | +66925604707 |
| 37. | ແອມມາ ອາກີໂນ | LuxDEv | 020 55580823 |
| 38. | ອາກີໂກະ ອິໂນກູຈິ | FAO | 020 52126090 |
| 39. | ບຸນທ່ຽງ ສຸລີວັນ | ສະພາການຄ້າ ແລະ ອຸດສາຫະກຳແຂວງ ຫຼວງພະບາງ | 020 55514505 |
| 40. | ຈັນທະພອນ ທຳມະວົງ | FAO CAWA project | 020 22902323 |
| 41. | ທອງດຳ ພົງພິຈິດ | Sustainable Agriculture and Environment Development Association (SAEDA) | 020 56394669 |
| 42. | ຈັກກະພົງ ພຣະປານຈິດ | Oxfam in Laos | 020 55233312 |
| 43. | ຄາຣິນ ສະມອນເລີ | IISD | +41789110896 |
| 44. | ບຸນຍະເດດ ພວງມາລາ | RECOFTC | 020 2222 1316 |
| 45. | ວິລະມິນ ພົນທອງສີ | CDE (Centre for Development and Environment) | 020 77511044 |
| 46. | ໄບ ມິວ | CDE | 020 59724906 |
| 47. | ສຸກກະເສີມ ລໍມາດມະນີວົງ | FAO | 020 59844588 |
| 48. | ຈາຣິຍາ ຈັນທະຜາສຸກ | IPD-RAI | 020 58888215 |
| 49. | ຕຸ້ມຄຳ ພວງມະຈັນ | Independent | 020 23076666 |
| 50. | ສອນດາລິນ ພູມວົງໄຊ | N/A | 020 29068888 |
| 51. | ປຸກກີ້ ວົງເສນາ | | 020 56511975 |
| 52. | ບຸນເຮັງ ສຸດທິຈັກ | Lao Youth Radio | 020 55400099 |
| 53. | ແອມມາ ເຈສຊີ ແມັກກາຍ | ອົງການອາຫານ ແລະ ກະສິກຳ ຂອງ ສະຫະ ປະຊາຊາດ (FAO) | |
| 54. | ລໍແຣນສ ເຈນນີ | NIRAS-IP Consult | +41794754587 |
| 55. | ມາເຣຍ ແກລດດີ ຊາໂວໄລເນນ | NIRAS-IP Consult | +358404514677 |
| 56. | ອາເລັກສ ມູຣູມູຊາ | NIRAS-IP Consult | +256 782343626 |
| 57. | ເລໂນລ ບຸນເພັງ | LIFE project / VFI | 020 5562 4080 |
| 58. | ສົມຕິສຸກ ລໍມະນີ | ພະແນກແຜນການ ແລະ ການລົງທຶນ | 020 59804444 |

| ລ/ດ | ຊື່ ແລະ ນາມສະກຸນ | ອົງການຈັດຕັ້ງ | ທີ່ຢູ່ຕິດຕໍ່ |
|---|---|---|---|
| 59. | ວິສຸດາ ແກ້ວເມືອງມອງ | LIFE project | 020 59443141 |
| 60. | ໄມເຄີລ ແຟນເນມາ | World Renew | 020 22432230 |
| 61. | ເພັດດາວັນ ສີປະເສີດ | LIFE, VFI | 020 55196034 |
| 62. | ທິບພະວົງ ບຸບຜາ | Freelance | 020 22243481 |
| 63. | ຕາງໜ້າ | ຫ້ອງການແຜນການ ແລະ ການລົງທຶນເມືອງ, ເມືອງ ນໍ້າບາກ, ແຂວງຫຼວງພະບາງ | 020 22357697 |
| 64. | ສຸລິສັກ ໂພລາກຸນ | ຫ້ອງການແຜນການ ແລະ ການລົງທຶນເມືອງ, ເມືອງ ນໍ້າບາກ, ແຂວງຫຼວງພະບາງ | 020 22357697 |
| 65. | ຊາລ ແອນດຣິວ ນາໂດ | FAO | 3478774931 |
| 66. | ຂັນແກ້ວ ອຸປຣາວັນ | GIZ Laos | 020 55693065 |
| 67. | ເຮືອງສະຫວັນ ແສງຄໍາຍອງ | ກົມສົ່ງເສີມການລົງທຶນ | 020 22224468 |
| 68. | ສູນທອນ ອິນທະປັນຍາ | ສູນຄົ້ນຄວ້າດ້ານນະໂຍບາຍການພັດທະນາ, ກະຊວງແຜນການ ແລະ ການລົງທຶນ | 020 54224022 |
| 69. | ໂຣລີ ພັນທະວົງ | ກົມສົ່ງເສີມການລົງທຶນ ( MPI ) | 020 5689 0323 |
| 70. | ຄໍາພິ ຫຼວງເພັດ | ສູນຄົ້ນຄວ້າດ້ານນະໂຍບາຍການພັດທະນາ | 020 5954 8112 |
| 71. | ລິນທອງ ສີລິມະໂນທໍາ | | 020 55770577 |
| 72. | ເພັດ ພິມມະຈັນ | ຫ້ອງການການເງິນເມືອງ, ເມືອງ ກາສີ | 020 55544746 |
| 73. | ຄໍາບາງ ທິບພະວົງ | Lao Development of Human Resources in Rural Areas Association | 020 22227595 |
| 74. | ກອງມີ ແກ້ວປະທຸມ | Planning and investment office, Kasi district | 020 549 23 611 |
| 75. | ໄພວັນ ແກ້ວມະນີວົງ | ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ເມືອງ ກາສີ, ແຂວງວຽງຈັນ | 020 28318451 |
| 76. | ຮົ່ວຊົງ ປ່າຈ້າ | ຫ້ອງການແຜນການ ແລະ ການລົງທຶນ ເມືອງ, ແຂວງວຽງຈັນ | 020 98866738 |
| 77. | ເອເຣັນ ກາດເນີ | FAO | 020 56278698 |
| 78. | ຕູມາຍັງ ກີຢ່າງ | SAEDA | 020 54548042 |
| 79. | ແອັດວິນ ປາຍອນ | RECOFTC Laos and Cambodia | 020 55508273 |
| 80. | ທ ສອນ ສີຫາລາດ | ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ, ແຂວງວຽງຈັນ | 020 46449151 |
| 81. | ທ່າວ ສົງ ເຊຍດາລໍ່ | ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ເມືອງ ບໍລິຄັນ | 020 98013003 |
| 82. | ທ ຄໍາແພວ ວົງພະຈັນ | ຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເມືອງຫີນເຫີບ | 020 22245677 |
| 83. | ເຊຊີລ ໂກແຄວັດ | ສະຖານທູດ ຝຣັ່ງ | + 33 6 8 53 44 94 |

| ລ/ດ | ຊື່ ແລະ ນາມສະກຸນ | ອົງການຈັດຕັ້ງ | ທີ່ຢູ່ຕິດຕໍ່ |
|---|---|---|---|
| 84. | ສຸວັນນານ ແກ້ວທຳມະວົງ | ບໍລິສັດ ແມ່ຂອງປູກໄມ້ ຈຳກັດ | 020 54166695 |
| 85. | ຣອບ ໂຄລ | ໂຄງການຄຸ້ມຄອງທີ່ດິນ ປະຈຳພາກພື້ນແມ່ນ້ຳຂອງ (Mekong Region Land Governance (MRLG) Project) | 020 52438374 |
| 86. | ໄວໂອເລນ ໂຟຣິລ | LIWG | 020 23061662 |
| 87. | ຈານາ ເຣຣອລ | FAO | |
| 88. | ມີກາ ອິນກາລ | ໂຄງການຄຸ້ມຄອງທີ່ດິນ ປະຈຳພາກພື້ນແມ່ນ້ຳຂອງ (Mekong Region Land Governance (MRLG) Project) | 020 59921728 |
| 89. | ວັນໄຊ ຫວ່າ | ຫ້ອງການ ແຜນການ ແລະ ການລົງທຶນ, ເມືອງ ນ້ຳບາກ | 020 98468222 |
| 90. | ອັນສະນີ ສີປະສົງ | Swiss Agency for Development and Cooperation (SDC) | 020 54659345 |
| 91. | ຄຳສອນ ແກ້ວສັກສິດ | GIZ Laos | 020 98004111 |
| 92. | ສີພັນ ຈັນທະບູນ | ຫ້ອງການ ແຜນການ ແລະ ການລົງທຶນ, ເມືອງ ກາສີ | 020 58199555 |
| 93. | ຈັນສຸກ ສຸກວິໄຊ | ຫ້ອງການ ແຜນການ ແລະ ການລົງທຶນ, ແຂວງ ວຽງຈັນ | 020 58412766 |
| 94. | ເຕດ ສີສະຫວາດ | ຫ້ອງການ ແຜນການ ແລະ ການລົງທຶນ, ແຂວງ ວຽງຈັນ | 020 98715222 |
| 95. | ທ ເຕັ່ງເມັ່ງ ຢ່າງລີໄຊ | ຫ້ອງການ ແຜນການ ແລະ ການລົງທຶນ, ແຂວງ ວຽງຈັນ | 020 99963178 |
| 96. | ນາງ ຄຳມຸ່ຍ ໄຊຍະສຸກ | ຫ້ອງການ ແຜນການ ແລະ ການລົງທຶນ, ແຂວງ ວຽງຈັນ | 020 22444808 |
| 97. | ທ່ານ ພຸດທະສັກ ແກ້ວວິໄຊ | ຫ້ອງການ ແຜນການ ແລະ ການລົງທຶນ, ແຂວງ ວຽງຈັນ | 020 97884244 |
| 98. | ທ່ານ ຄຳແພງ ອ່ອນດວງດີ | ຫ້ອງການ ແຜນການ ແລະ ການລົງທຶນ, ແຂວງ ວຽງຈັນ | 020 56698050 |
| 99. | ນິພາພອນ ນາມປັນຍາ | HELVETAS Swiss Intercooperation Laos | 020 56324154 |
| 100. | ທ່ານ ແສງຈັນ ດາລາວົງ | ຫ້ອງການ ແຜນການ ແລະ ການລົງທຶນ, ແຂວງ ວຽງຈັນ | 020 97274999 |
| 101. | ວໍຣະສອນ ແດງກາຍາພິຈິດ | ກຸ່ມເຮັດວຽກດ້ານຂໍ້ມູນຂ່າວສານກ່ຽວກັບທີ່ດິນ (Land Information Working Group) | 020 55521037 |

| ລ/ດ | ຊື່ ແລະ ນາມສະກຸນ | ອົງການຈັດຕັ້ງ | ທີ່ຢູ່ຕິດຕໍ່ |
|---|---|---|---|
| 102. | ສົມໝາຍ ວັນລານຸວົງ | ຫ້ອງການ ແຜນການ ແລະ ການລົງທຶນ, ແຂວງ ວຽງຈັນ | 020 99636632 |
| 103. | ສີສະຫວັດ ມະລິຈິດ | ຫ້ອງການ ແຜນການ ແລະ ການລົງທຶນ, ເມືອງ ໂພນໂຮງ, ແຂວງ ວຽງຈັນ | 020 52221585 |
| 104. | ຮອງສຸດໃຈ ວິໄລພອນ | ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ | 020 52390199 |
| 105. | ວານິດາ ຂ້ອນວິຈິດ | GIZ-Land Programme | 020 55583383 |
| 106. | ພິລາວົງ ສີສຸດໂທ | ຫ້ອງການກະສິກຳ ແລະ ປ່າໄມ້, ເມືອງ ບໍລິຄັນ, ແຂວງບໍລິຄຳໄຊ | 020 23417000 |
| 107. | ສຸທິນ ສີບຸນເລີດ | ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ, ແຂວງວຽງຈັນ | 020 58938789 |
| 108. | ຈິນດາວອນ ໄພວົງສາ | ຫ້ອງການ ແຜນການ ແລະ ການລົງທຶນ, ເມືອງ ທ່າພະບາດ | 020 93634189 |
| 109. | ໄມຕາ ສີທັນດອນ | ຫ້ອງການ ແຜນການ ແລະ ການລົງທຶນ, ເມືອງ ທ່າພະບາດ | 020 77009115 |
| 110. | ອາລຸນ ມະໂນສານ | ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ແຂວງ ຫຼວງພະບາງ | 020 91545665 |
| 111. | ວັນເພັງ ດວງມາລາ | ຫ້ອງການ ແຜນການ ແລະ ການລົງທຶນ ເມືອງ | 020 98518444 |
| 112. | ສຸລິຍາ ມ້າວຄຳພົວ | ຫ້ອງການ ແຜນການ ແລະ ການລົງທຶນ, ເມືອງບໍລິຄັນ | 020 22112666 |
| 113. | ພານິດ ແສງມະນີ | ຫ້ອງການ ແຜນການ ແລະ ການລົງທຶນ, ເມືອງ | 020 58000559 |
| 114. | ພົງສະຫວັນ ສີຫານຸ | ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, | 020 29084212 |
| 115. | | ຫ້ອງການ ແຜນການ ແລະ ການລົງທຶນ, ເມືອງ ໂພນໂຮງ | 020 54666066 |
| 116. | ນ້ອຍ ຫຼວງປັນຍາ | ຫ້ອງການກະສິກຳ ແລະ ປ່າໄມ້, ເມືອງ | 020 55126019 |
| 117. | ບຸນມາ ພົມມະນີ | ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ | |
| 118. | ບົງ ມູນໄຊຍະພົມ | Helvetas Laos | 020 55526660 |
| 119. | ເຮືອງສະຫວັນ ແສງຄຳຍອງ | ກົມສົ່ງເສີມການລົງທຶນ | 020 22224468 |
| 120. | ຈິນຕະນາພອນ ແກ້ວວິຈິດ | CLICK | 020 77714900 |
| 121. | ທົງທອງ ຈັນທະວົງ | ຂະແໜງສົ່ງເສີມ ພະແນກແຜນການ ແລະ ການລົງທຶນແຂວງບໍລິຄຳໄຊ | 020 56656249 |
| 122. | ໂຮນອລ ຕູນດັງ | IISD | |

| ລ/ດ | ຊື່ ແລະ ນາມສະກຸນ | ອົງການຈັດຕັ້ງ | ທີ່ຢູ່ຕິດຕໍ່ |
|---|---|---|---|
| 123. | ນິດາ ອິນທະວົງ | ຫ້ອງການອຸດສາຫະກຳແລະການຄ້າ ເມືອງບໍລິຄັນ | 020 59200093 |
| 124. | ວາຍຸ ຫຼວງລາດບັນດິດ | ຫ້ອງການອຸດສາຫະກຳແລະການຄ້າ ເມືອງບໍລິຄັນ | 020 23433777 |
| 125. | ຕີ່ ຈັນທະລັງສີ | ພະແນກແຜນການ ແລະ ການລົງທຶນ ແຂວງບໍລິຄຳໄຊ | 020 78712384 |
| 126. | ລິນທອງ ສີລິມະໂນທຳ | ພະແນກແຜນການ ແລະ ການລົງທຶນ ແຂວງວຽງຈັນ | 020 55770577 |
| 127. | ອານຸສອນ ອ່ອນສີເມືອງ | ກະສິກຳ | 020 55006695 |
| 128. | ພອນໄຊ ບໍລິວັນ | ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງຫົງສາ | 020 22821883 |
| 129. | ຕາງໜ້າ | ຫ້ອງການແຜນການ ແລະ ການລົງທຶນ | 020 22455537 |
| 130. | ອາຄີ ພົມມະຈິດ | ກົມຄຸ້ມຄອງແຮງງານ | 020 59969599 |
| 131. | ວັນນະສຸກ ຕຽນ | GIZ CliPAD/I-GFLL project | 020 555 07641 |
| 132. | ລໍຣາ ສະມິດ | NIRAS-IP Consult | |
| 133. | ດາຣິລ ວູເກນ | NIRAS-IP Consult | |
| 134. | ຈິດຕະກອນ ສຸທຳມະວົງ | ສສຜ | 020 5987 4321 |
| 135. | ບົວວັນ ແກ່ນດາລາ | ຫ້ອງການແຜນການແລະການລົງທຶນ | 020 54111622 |
| 136. | ປາລີນາ ທອງອຸທຸມ | Oxfam in Laos | 020 59663244 |
| 137. | ມອນຄຳ ສຸກສົງຫາ | ສະພາການຄ້າ ແລະ ອຸດສາຫະກຳ ແຂວງອຸດົມໄຊ | 020 23115577 |
| 138. | ໄຊສະຫວ່າງ ອິນແກ້ວມະນີ | ສະພາການຄ້າ ແລະ ອຸດສາຫະກຳ ແຂວງອຸດົມໄຊ | 020 9269 9696 |
| 139. | ສົມວັນ ພົມມະລິຈັນ | ຫ້ອງການກະສິກຳ ແລະ ປ່າໄມ້ເມືອງນ້ຳບາກ | 020 98991140 |

- ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມທີ່ໄດ້ລົງທະບຽນ ອາດບໍ່ຄົບຖ້ວນຕາມຈຳນວນທີ່ເຂົ້າຮ່ວມຕົວຈິງ

# ເອກະສານຊ້ອນທ້າຍທີ II

## ວາລະຂອງ ກອງປະຊຸມ ຫຼາຍຝ່າຍ ປະຈຳປີ 2021 ກ່ຽວກັບ RAI

ເອກະສານຊ້ອນທ້າຍທີ II: ວາລະ ຂອງ ກອງປະຊຸມ ຫຼາຍຝ່າຍ ກ່ຽວກັບ RAI ຄັ້ງທີ 1

| **ເວລາ** | | **ຜູ້ຮັບຜິດຊອບ** |
|---|---|---|
| 8:30 – 9:05<br><br>(35 ນາທີ) | **ພິທີເປີດ:**<br>• ກ່າວ ຕ້ອນຮັບ [10 ນາທີ]<br>• ກ່າວເປີດກອງປະຊຸມ [20 ນາທີ]<br>  ○ ພາກລັດ<br>  ○ ຄູ່ຮ່ວມພັດທະນາ<br>• ຈຸດປະສົງ ແລະ ວາລະຂອງກອງປະຊຸມ | - ທ່ານ ພອນທະວົງ ສົງຫາລາດ, ກົມ ສົ່ງເສີມການລົງທຶນ, ຜທ<br><br>- ທ່ານ ອຸຕະແກ້ວ ແກ້ວດວງສິນ,ຫົວໜ້າກົມ ສົ່ງເສີມການລົງທຶນ, ຜທ<br><br>- ທ່ານ ນາງ Eva Prediger – RGIL manager in Laos, GIZ<br><br>- ທ່ານ ນາງ ບົວໄຂ ພິມມະວົງ, ຜູ້ອຳນວຍຄວາມສະດວກ |
| 9:05 – 10:15<br><br>(70 ນາທີ) | **ວາລະທີ 1: ສ້າງຄວາມເຂົ້າໃຈໂດຍລວມ ກ່ຽວກັບ ສະພາບການຈັດຕັ້ງປະຕິບັດ ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ (RAI) ຢູ່ ສປປ ລາວ**<br>• ສາຍວີດີໂອສັ້ນ: ກ່ຽວກັບການລົງທຶນທີ່ມີຄວາມຮັບຜິດຊອບ ດ້ານກະສິກຳ ແລະ ປ່າໄມ້ ຢູ່ ສປປ ລາວ [7 ນາທີ]<br>• ນຳສະເໜີຜົນ ຂອງການສຳຫຼວດ ກ່ຽວກັບ ພວກເຮົາຢູ່ຈຸດໃດ ຕໍ່ກັບ ວຽກງານການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ [10 ນາທີ]<br>• ພາບລວມທາງດ້ານນະໂຍບາຍ ແລະ ການຈັດຕັ້ງປະຕິບັດ ວຽກງານການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ (RAI) [10/20 ນາທີ]<br>• ການຈັດຕັ້ງປະຕິບັດ ວຽກງານການສົ່ງເສີມ ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ (RAI) ຂອງພາກເອກະຊົນ [10 ນາທີ] | ທ່ານ ນາງ Akiko Inoguchi, FAO<br><br>ທ່ານ ນາງ ພູວອນ ທຳມະວົງ, ກົມ ສົ່ງເສີມການລົງທຶນ, ຜທ ແລະ ທ່ານ ຜູ້ຕາງໜ້າ ຂອງກົມແຜນການ ແລະ ການເງິນ, ກປ |

| | | |
|---|---|---|
| | • ຜົນການຄົ້ນຄວ້າ ຂອງ CDE ກ່ຽວກັບ ບັນຊີການເຊົ່າ ແລະ ສຳປະທານທີ່ດິນ ລົງເລີກດ້ານກະສິກຳ ແລະ ປ່າໄມ້ [10 ນາທີ]<br>• ຖາມ ແລະ ຕອບ [10 ນາທີ]<br>• ສະແດງຮູບພາບ ກ່ຽບກັບ ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ [3 ນາທີ] | ທ່ານ ຜູ້ຕາງໜ້າ ຈາກສະພາ ອຸດສາຫະກຳ ແລະ ການຄ້າ ແຫ່ງຊາດ ລາວ<br>(LNCCI)<br>ທ່ານ ນາງ ເພັດສະພອນ ຖາມະສັກ, CDE<br>ທ່ານ ນາງ ບົວໄຂ ພົມມະວົງ, ຜູ້ອຳນວຍຄວາມສະດວກ<br>FAO |
| **15 ນາທີ** | **ພັກຜ່ອນ** | |
| 10:30 – 11:35<br>(65 ນາທີ) | **ວາລະທີ 2: ແລກປ່ຽນປະສົບການ ແລະ ບົດຮຽນທີ່ດີ**<br>• ບົດນຳສະເໜີ #1: ການລົງທຶນປູກກ້ວຍ ຢູ່ແຂວງ ຫຼວງພະບາງ [15 ນາທີ]<br>- ຜູ້ຮ່ວມສົນທະນາ ກ່ຽວກັບບົດນຳສະເໜີ [10 ນາທີ]<br>• ບົດນຳສະເໜີ #2: ການຜະລິດກະສິກາແບບເຮັດສັນຍາສອງສົ້ນກັບຊາວບ້ານ: ການຕອບສະໜອງ ຕໍ່ກັບ ແນວໂນ້ມການຜະລິດກະສິກຳ ທີ່ກຳລັງເພີ່ມຂຶ້ນ [15 ນາທີ]<br>- ຜູ້ຮ່ວມສົນທະນາ ກ່ຽວກັບ ບົດນຳສະເໜີ [10 ນາທີ] | ທ່ານ ປອ. ສິນທະລອນ ສີໂພໄຊ, ພະແນກແຜນການ ແລະ ການລົງທຶນ ແຂວງ ຫຼວງພະບາງ<br>ທ່ານ ນາງ ພູວອນ ທຳມະວົງ, ກົມສົ່ງເສີມການລົງທຶນ, ຜທ ແລະ<br>ທ່ານ ແສງທອງ ສຸກຄະທຳມະວົງ, ກົມສົ່ງເສີມການລົງທຶນ, ຜທ ແລະ ທ່ານ ປອ. Robert Cole, MRLG |

| | | |
|---|---|---|
| | • ຖາມ ແລະ ຕອບ | ທ່ານ ປອ. ສຸວັນທອງ ນາມວົງ, ກົມສົ່ງເສີມເຕັກນິກກະສິກຳ ແລະ ສະຫະກອນ, ກະຊວງກະສິກຳ ແລະ ປ່າໄມ້<br><br>ຜູ້ທ່ານ ນາງ ບົວໄຂ ພົມມະວົງ, ຜູ້ອຳນວຍຄວາມສະດວກ |
| | **ພັກທ່ຽງ** | |
| 1:30 – 2:40<br><br>(70 ນາທີ) | **(ສືບຕໍ່) ວາລະທີ 2:**<br><br>• ບົດນຳສະເໜີ #3: ບັນຫາບັນຫາ ກ່ຽວກັບການລົງທຶນ ຈາກບົດຮຽນການນາໃຊ້ເຄື່ອງມື ການຕິດຕາມໂຄງການລົງທຶນ (IPM) [20 ນາທີ]<br>  ○ ຜູ້ຮ່ວມສົນທະນາ: ກ່ຽວກັບ ບັນຫາບັນຫາ ແລະ ການຜັນຂະຫຍາຍການນຳໃຊ້ເຄື່ອງມືໃນຂອບເຂດກວ້າງ [10 ນາທີ]<br><br>• ບົດນຳສະເໜີ #4: ກົນໄກການແກ້ໄຂ ຄຳຮ້ອງທຸກ ພາຍໃນຂອງບໍລິສັດ [15 ນາທີ]<br>  ○ ຜູ້ຮ່ວມສົນທະນາ: ກ່ຽວກັບການເຊື່ອມໂຍງ ແລະ ຄວາມສອດຄ່ອງ ກັບລະບົບການແກ້ໄຂ ຄຳຮ້ອງທຸກ ຂອງພາກລັດ [10 ນາທີ]<br><br>• ຖາມ ແລະ ຕອບ [15 ນາທີ] | ທ່ານ ນາງ ຂັນແກ້ວ ອຸປຣະວັນ, **GIZ**<br><br>ທ່ານ ພອນທະວົງ ສິງຫາລາດ, ກົມສົ່ງເສີມການລົງທຶນ, ຜທ ທ່ານ ຜູ້ຕາງໜ້າ ຂອງກົມແຜນການ ແລະ ການເງິນ, ກປ<br><br>ທ່ານ ພອນສະຫວັນ ຈິນດາມະນີ, ບໍລິສັດ ປູກໄມ້ ແມ່ຂອງ (**MPT**)<br><br>ທ່ານ ເຣືອງສະຫວັນ ແສງຄຳຢອງ, ກົມສົ່ງເສີມການລົງທຶນ, ຜທ<br><br>ທ່ານ ນາງ ບົວໄຂ ພົມມະວົງ, ຜູ້ອຳນວຍຄວາມສະດວກ |
| **10 ນາທີ** | **ພັກຜ່ອນ** | |

| | | |
|---|---|---|
| 2:50 - 4:25<br><br>(95 ນາທີ) | **ວາລະທີ 3: ບົດບາດ ຂອງບັນດາຜູ້ມີສ່ວນກ່ຽວຂ້ອງ ແລະ ກຳນົດວິທີການ ໃນການສ້າງຄວາມເຂັ້ມແຂງ ໃນການຮ່ວມມື ແລະ ການຈັດຕັ້ງປະຕິບັດ**<br><br>• ເວທີສົນທະນາ #1: ສິ່ງທ້າທາຍຕົ້ນຕໍ ( 3 ຢ່າງ) ແລະ ບຸລິມະສິດ (3 ຢ່າງ) ໃນການຈັດຕັ້ງປະຕິບັດວຽກງານ ພາຍໃນ 5 ປີຕໍ່ໜ້າ ມີຫຍັງແດ່? [25 ນາທີ]<br>  ○ ຜູ້ຮ່ວມສົນທະນາ #1: ທັດສະນະຂອງ ກົມແຜນການ ແລະ ການເງິນ, ກະຊວງກະສິກຳ [5 ນາທີ]<br>  ○ ຜູ້ຮ່ວມສົນທະນາ #2: ທັດສະນະຂອງ ກົມສົ່ງເສີມການລົງທຶນ, ກະຊວງແຜນການ [5 ນາທີ]<br>  ○ ຜູ້ຮ່ວມສົນທະນາ #3: ທັດສະນະຂອງ ນັກລົງທຶນ [5 ນາທີ]<br>  ○ ຜູ້ຮ່ວມສົນທະນາ #4: ທັດສະນະຂອງ ອົງການຈັດຕັ້ງທາງສັງຄົມ (CSO) [5 ນາທີ]<br>• ກິດຈະກຳ ກຸ່ມ (ກຸ່ມ ຕາມຂະແໜງການ): ໂດຍອີງຕາມຄວາມຄິດເຫັນ ຈາກ ຜູ້ເຂົ້າຮ່ວມສົນທະນາ ທີ່ໄດ້ນຳສະເໜີ, ໃຫ້ຄັດເລືອກ ແລະ ສົນທະນາ ສະເພາະ 3 ບຸລິມະສິດ ***ຕໍ່ກຸ່ມ*** ເພື່ອຈັດຕັ້ງປະຕິບັດພາຍໃນ 12 ເດືອນ ຂ້າງ ໜ້າ. [45 ນາທີ]<br>• ສົນທະນາລວມ [20 ນາທີ]<br><br>• ສັງລວມຜົນຈາກການສົນທະນາໂດຍຫຍໍ້ ແລະ ສະຫຼຸບຜົນ ຂອງ ວາລະທີ 3 [3 ນາທີ] | ທ່ານ ນາງ ບົວໄຂ ພົມມະວົງ, ຜູ້ອຳນວຍຄວາມສະດວກ<br><br>ຜູ້ອຳນວຍຄວາມສະດວກ ໃນການແບ່ງເປັນກຸ່ມສົນທະນາ<br><br>ຜູ້ອຳນວຍຄວາມສະດວກ ໃນການແບ່ງເປັນກຸ່ມສົນທະນາ<br><br>ທ່ານ ນາງ ບົວໄຂ ພົມມະວົງ, ຜູ້ອຳນວຍຄວາມສະດວກ |
| 4:25-5:00 | **ສະຫຼຸບສັງລວມການດຳເນີນກອງປະຊຸມ:**<br><br>• ຄຳຄິດເຫັນ ແລະ ສະຫຼຸບສັງລວມ – ເປີດເວທີ ສົນທະນາລວມ [15 ນາທີ] | ທ່ານ ປອ. ວົງ ນັນທະວົງ, NIRAS IP-Consult |

| | | |
|---|---|---|
